ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 825 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 24 / 12 / 25

# ດຳລັດ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້
## ຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ປີ 2026-2040

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ໂທລະຄົມມະນາຄົມ ເລກທີ 05/ສພຊ, ລົງວັນທີ 16 ພະຈິກ 2012,
- ອີງຕາມ ໜັງສືສະເໜີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 4188/ກຕສ, ລົງວັນທີ 01 ທັນວາ 2025.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ເຫັນດີຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ ປີ 2026-2040.

**ມາດຕາ 2** ມອບໃຫ້ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ປີ 2026-2040.

**ມາດຕາ 3** ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ປີ 2026 ຫາ 2040

ນະຄອນຫຼວງວຽງຈັນ

2025

## ສາລະບານ

**ພາກທີ I........5**

**ສະພາບລວມ........5**

1. ສະພາບການພັດທະນາວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດສາກົນ........5
2. ສະພາບການພັດທະນາ ໂທລະຄົມມະນາຄົມ ແລະ ອິນເຕີເນັດຂອງ ສປປ ລາວ........6
3. ສິ່ງທ້າທາຍ ຂອງວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢູ່ ສປປ ລາວ: ........7

**ພາກທີ II........8**

**ວິໄສທັດ ແລະ ຈຸດປະສົງ........8**

1. ວິໄສທັດ........8
2. ຈຸດປະສົງ........8
3. ເປົ້າໝາຍຂອງຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ປີ 2026 ຫາ 2040...8

**ພາກທີ III........11**

**ຍຸດທະສາດກ່ຽວກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນໄລຍະປີ 2026 ຫາ 2040........11**

**1. ຍຸດທະສາດທີ 1: ການພັດທະນານິຕິກຳດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ........11**

- 1.1 ເປົ້າໝາຍ........11
- 1.2 ແຜນງານ........11
- 1.3 ວຽກຈຸດສຸມ........11
- 1.4 ໂຄງການສະໜັບສະໜູນ........11

**2. ຍຸດທະສາດທີ 2: ການພັດທະນາບຸກຄະລາກອນທາງດ້ານເຕັກໂນໂລຊີດິຈິຕອນ........12**

- **2.1** ເປົ້າໝາຍ........12
- **2.2** ແຜນງານ........12
- **2.3** ວຽກຈຸດສຸມ........12
- **2.4** ໂຄງການສະໜັບສະໜູນ........13

**3. ຍຸດທະສາດທີ 3: ການຄຸ້ມຄອງຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ........13**

- **3.1** ເປົ້າໝາຍ........13
- **3.2** ແຜນງານ........14

3.3 ວຽກຈຸດສຸມ........................................................................................14

3.4 ໂຄງການສະໜັບສະໜູນ........................................................................15

4. ຍຸດທະສາດທີ 4: ການພັດທະນາໂຄງລ່າງພື້ນຖານໄຫລະຄົມມະນາຄົມ ແລະ ອິນເຕີເນັດ....................15

4.1 ເປົ້າໝາຍ........................................................................................15

4.2 ແຜນງານ........................................................................................15

4.3 ວຽກຈຸດສຸມ........................................................................................16

4.4 ໂຄງການສະໜັບສະໜູນ........................................................................16

5. ຍຸດທະສາດທີ 5 ການພັດທະນາ, ສົ່ງເສີມ ແລະ ການຄຸ້ມຄອງ ພລັດຟອມ........................................17

5.1 ເປົ້າໝາຍ........................................................................................17

5.2 ແຜນງານ........................................................................................17

5.3 ວຽກຈຸດສຸມ........................................................................................17

5.4 ໂຄງການສະໜັບສະໜູນ........................................................................18

6. ຍຸດທະສາດທີ 6 ການຄຸ້ມຄອງ ແລະ ສົ່ງເສີມ ທຸລະກິດໄທລະຄົມມະນາຄົມ ແລະ ອິນເຕີເນັດ....................18

6.1 ເປົ້າໝາຍ........................................................................................18

6.2 ແຜນງານ........................................................................................18

6.3 ວຽກຈຸດສຸມ........................................................................................19

6.4 ໂຄງການສະໜັບສະໜູນ........................................................................19

7. ຍຸດທະສາດທີ 7: ການພັດທະນາ, ຊຸກຍູ້ສົ່ງເສີມອຸດສະຫະກຳ ຂະແໜງການໄທລະຄົມມະນາຄົມ ແລະ ອິນເຕີເນັດ 20

7.1 ເປົ້າໝາຍ........................................................................................20

7.2 ແຜນງານ........................................................................................20

7.3 ວຽກຈຸດສຸມ........................................................................................21

7.4 ໂຄງການສະໜັບສະໜູນ........................................................................21

8. ຍຸດທະສາດທີ 8: ການຮ່ວມມື ແລະ ເຊື່ອມໂຍງກັບເພື່ອນມິດຍຸດທະສາດ ແລະ ສາກົນ.................................21

8.1 ເປົ້າໝາຍ........................................................................................21

8.2 ແຜນງານ........................................................................................21

8.3 ວຽກຈຸດສຸມ........................................................................................22

**8.4** ໂຄງການສະໜັບສະໜູນ ........................................ 22

**ພາກທີ IV ........................................ 23**

**ວິທີການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ ........................................ 23**

**1.** ວິທີການ ແລະ ກົນໄກຈັດຕັ້ງປະຕິບັດ ........................................ 23

**2.** ການຕິດຕາມ ແລະ ປະເມີນຜົນ ........................................ 24

# ພາກທີ I

# ສະພາບລວມ

## 1. ສະພາບການພັດທະນາວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດສາກົນ

ປະຈຸບັນ, ການພັດທະນາວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດສາກົນ ໄດ້ກ້າວເຂົ້າສູ່ຍຸກເສດຖະກິດ ແລະ ສັງຄົມດິຈິຕອນ ທີ່ກາຍເປັນເຄື່ອງມືອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ເຊິ່ງເປັນປັດໄຈສຳຄັນໃຫ້ແກ່ການພັດທະນາເຕັກໂນໂລຊີໃໝ່ເປັນຕົ້ນ ກຸ່ມຂໍ້ມູນຜູກພັນ (Blockchain Technologies), ການພິມສາມມິຕິ (Three-dimensional Printing, 3D), ອິນເຕີເນັດສັບພະສິ່ງ (Internet of Thing, IoT), ລະບົບສື່ສານ 5G, ຖານຂໍ້ມູນມະຫາສານ (Big Data), ລົດ ແລະ ຫຸ່ນຍົນ ແບບອັດຕະໂນມັດ (Auto Mobile and Robotics) ແລະ ປັນຍາປະດິດ (Artificial Intelligence)[1]. ຊຶ່ງໄດ້ປ່ຽນໂຄງສ້າງທາງເສດຖະກິດ, ຂະບວນການຜະລິດ, ການຄ້າ, ການບໍລິການ ແລະ ຂະບວນການທາງສັງຄົມອື່ນໆ ລວມທັງການພົວພັນລະຫວ່າງຄົນນຳອີກ. ອີງຕາມຂໍ້ມູນຂອງທະນາຄານໂລກ (World Bank)[2] ທຸກໆອັດຕາ 10 ສ່ວນຮ້ອຍ ໃນການເພີ່ມຂຶ້ນຂອງອັດຕາຂະຫຍາຍຕົວຂອງອິນເຕີເນັດ ຄວາມໄວສູງ, ຄາດຄະເນຈະເຮັດໃຫ້ GDP ມີການຂະຫຍາຍຕົວ ໃນອັດຕາ 1,38 ສ່ວນຮ້ອຍ ສຳລັບປະເທດທີ່ກຳລັງພັດທະນາ ແລະ 1,21 ສ່ວນຮ້ອຍ ສຳລັບປະເທດພັດທະນາແລ້ວ, ການໃຊ້ຈ່າຍໃນການບໍລິການໂທລະຄົມ ແລະ ອິນເຕີເນັດທົ່ວໂລກຄາດວ່າຈະບັນລຸ 1,55 ຕື້ໂດລາສະຫະລັດໃນປີ 2024, ເພີ່ມຂຶ້ນ 4 ສ່ວນຮ້ອຍ ເມື່ອທຽບໃສ່ປີ 2023[3] ແລະ ຕາມບົດລາຍງານຂອງ ອົງການໂທລະຄົມສາກົນ (ITU)[4] ປີ 2024 ໄດ້ໃຫ້ຮູ້ວ່າ ມີປະມານ 5,3 ຕື້ ຄົນ, ຫຼື 66 ສ່ວນຮ້ອຍ ຂອງປະຊາກອນໂລກໄດ້ມີການນຳໃຊ້ອິນເຕີເນັດໃນການເຊື່ອມຕໍ່ເຊິ່ງກັນ ແລະ ກັນ, ເພີ່ມຂຶ້ນ 6,1 ສ່ວນຮ້ອຍ ເມື່ອທຽບໃສ່ປີ 2021. ໃນຊ່ວງໄລຍະ 10 ປີ ອັດຕາການນຳໃຊ້ອິນເຕີເນັດຜ່ານໂທລະສັບມືຖື (mobile-broadband subscriptions ) ເພີ່ມຂຶ້ນໂດຍສະເລ່ຍ 14,8 ສ່ວນຮ້ອຍຕໍ່ປີ, ທຽບໃສ່ການນຳໃຊ້ລະບົບມືຖື (mobile-cellular subscriptions ) ມີພຽງແຕ່ 2 ສ່ວນຮ້ອຍ.




ສຳລັບການນຳໃຊ້ບຣອດແບນແບບຄົງທີ່ (Fixed-broadband subscriptions ) ແມ່ນມີການເພີ່ມຂຶ້ນ ຢ່າງບໍ່ຢຸດຢັ້ງ, ໂດຍສະເລ່ຍ 6,7 ສ່ວນຮ້ອຍໃນໄລຍະ 10 ປີຜ່ານມາ. ຂະນະດຽວກັນ, ການສະໝັກໃຊ້ໂທລະສັບຄົງທີ່ (fixed-telephone subscriptions) ສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງ ສະເລ່ຍ 4,2 ສ່ວນຮ້ອຍໃນແຕ່ລະປີ.




ໃນພາກພື້ນອາຊີ-ປາຊີຟິກ ການເຊື່ອມຕໍ່ອິນເຕີເນັດຜ່ານໂທລະສັບມືຖືຍັງເປັນຮູບແບບຫຼັກທີ່ຜູ້ໃຊ້ບໍລິການນຳໃຊ້ເຂົ້າ

[1] https://www.weforum.org/
[2] https://www.worldbank.org/
[3] https://www.statista.com/
[4] https://www.itu.int/en/ITU-D/Statistics/Pages/stat/default.aspx

ໃນການເຊື່ອມຕໍ່ອິນເຕີເນັດ, ເຊິ່ງຈຳນວນຜູ້ໃຊ້ບໍລິການກວມເອົາປະມານ 96 ສ່ວນຮ້ອຍ ຂອງປະຊາກອນໃນພາກພື້ນ. ເຕັກໂນໂລຊີ ແລະ ການບໍລິການຜ່ານໂທລະສັບມືຖື ເປັນສ່ວນປະກອບທີ່ສຳຄັນຕໍ່ເສດຖະກິດ ຂອງພາກພື້ນອາຊີ-ປາຊີຟິກ, ໃນປີ 2023 ສາມາດ ສ້າງລາຍຮັບໄດ້ 5,3 ສ່ວນຮ້ອຍ ຂອງ GDP ທຽບເປັນມູນຄ່າປະມານ 880 ຕື້ ໂດລາສະຫະລັດ ແລະ ສ້າງວຽກເຮັດງານທຳຫຼາຍກ່ວາ 13 ລ້ານໜ້າວຽກ ໂດຍທາງກົງ ແລະ ທາງອ້ອມ[5]. ເຊິ່ງໄດ້ສ້າງລາຍຮັບຈາກການເກັບພາສີໃຫ້ແກ່ພາກລັດໃນພາກພື້ນ ປະມານ 80 ຕື້ໂດລາສະຫະລັດ.

## 2. ສະພາບການພັດທະນາ ໂທລະຄົມມະນາຄົມ ແລະ ອິນເຕີເນັດຂອງ ສປປ ລາວ

ໃນຊຸມປີທີ່ຜ່ານມາ, ລັດຖະບານ ສປປ ລາວ ໄດ້ສຸມໃສ່ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດເພື່ອເປັນພື້ນຖານໃນການຫັນເປັນທັນສະໄໝ ກໍ່ຄືການຫັນເປັນດີຈິຕອນ ໂດຍໄດ້ເອົາໃຈໃສ່ປັບປຸງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດໃນການເຊື່ອມໂຍງກັບອານຸພາກພື້ນ, ພາກພື້ນ ແລະ ສາກົນ. ສ້າງເຄືອຂ່າຍສາຍໄຍແກ້ວນຳແສງເປັນພື້ນຖານໂຄງລ່າງການສື່ສານສຳຄັນເພື່ອເຊື່ອມໂຍງທັງພາຍໃນ ແລະ ສາກົນ. ປັດຈຸບັນໄດ້ມີການຕິດຕັ້ງສາຍໄຍແກ້ວນຳແສງ (Fiber Optic Cable) ທັງໝົດ 96.670 ກິໂລແມັດ ຊຶ່ງກວມເອົາທຸກເມືອງ ທຽບເປັນ 97 ສ່ວນຮ້ອຍຂອງບັນດາບ້ານໃນທົ່ວປະເທດ. ບົດລາຍງານຂອງ ທະນາຄານໂລກ (World Bank)[6] ແລະ ອົງການໂທລະຄົມສາກົນ (ITU)[7] ໄດ້ສະແດງໃຫ້ເຫັນວ່າແຕ່ປີ 2015 ທຽບໃສ່ ປີ 2022 ຈຳນວນຜູ້ເຂົ້າເຖິງການນຳໃຊ້ອິນເຕີເນັດ ແມ່ນເພີ່ມຂຶ້ນ ຈາກ 18,2 ສ່ວນຮ້ອຍ ເປັນ 62,6 ສ່ວນຮ້ອຍ ຂອງປະຊາກອນທັງໝົດ, ເຊິ່ງເພີ່ມຂຶ້ນ 1,4 ສ່ວນຮ້ອຍ ທຽບໃສ່ປີຜ່ານມາ. ຈຳນວນຜູ້ຊົມໃຊ້ໂທລະສັບມືຖື ແມ່ນ ກວມ 65 ສ່ວນຮ້ອຍ ຂອງປະຊາກອນ ເຊິ່ງເພີ່ມຂຶ້ນ 2,4 ສ່ວນຮ້ອຍ ເມື່ອທຽບໃສ່ ປີຜ່ານມາ.






ການນຳໃຊ້ໂທລະສັບມືຖື ແລະ ອິນເຕີເນັດ ເປັນຕົວຊີ້ວັດພື້ນຖານສຳຄັນຂອງການພັດທະນາ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ຊຶ່ງອັດຕາການນຳໃຊ້ໂທລະສັບມືຖືກວມເອົາເຖິງ 92 ສ່ວນຮ້ອຍ ແລະ ການນຳໃຊ້ອິນເຕີເນັດຂອງປະຊາຊົນລາວມີການຂະຫຍາຍຕົວແບບກ້າວກະໂດດ ຈາກທີ່ຕ່ຳກວ່າ 5 ສ່ວນຮ້ອຍ ໃນປີ 2010 ມາເປັນ 51 ສ່ວນຮ້ອຍ ໃນປີ 2022. ສັນຍານໂທລະສັບມືຖືລະບົບ 2G ຄອບຄຸມໄດ້ 97 ສ່ວນຮ້ອຍ, 3G ຄອບຄຸມໄດ້ 85 ສ່ວນຮ້ອຍ, 4G ຄອບຄຸມໄດ້ 76 ສ່ວນຮ້ອຍ ຂອງບັນດາບ້ານໃນຂອບເຂດທົ່ວປະເທດ ໃນປີ 2024. ໃນປີ 2023 ແລະ 2024, ດັດຊະນີການພັດທະນາ ICT (IDI) ຂອງລາວແມ່ນ 58.0 ໃນ 100, ສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມທີ່ຈະພັດທະນາດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຂອງປະເທດ, ເຖິງແມ່ນວ່າຄະແນນບໍ່ໄດ້ມີການປ່ຽນແປງແຕ່ ສປປ ລາວ ຍັງຄົງສຸມໃສ່ການພັດທະນາພື້ນຖານໂຄງລ່າງດ້ານດີຈິຕອນ ແລະ ຫຼຸດອັດຕາຄວາມແບ່ງແຍກທາງດ້ານດີຈິຕອນໃນເຂດຊົນນະບົດ.

---

[5] https://www.gsma.com/

[6] https://data.worldbank.org/indicator/IT.NET.USER.ZS?end=2021&locations=LA&start=2015

[7] https://datahub.itu.int/data/?e=LAO&c=701&i=11624

ລັດຖະບານ ສປປ ລາວ ເຫັນໄດ້ເຖິງຄວາມສຳຄັນຂອງການຫັນເປັນດິຈິຕອນເພື່ອກຽມພ້ອມເຂົ້າສູ່ຍຸກເສດຖະກິດ ແລະ ສັງຄົມດິຈິຕອນ, ສະແດງອອກໃນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ໄດ້ມີທິດໃຫ້ເລັ່ງຜັນຂະຫຍາຍການນຳໃຊ້ ICT ເຂົ້າໃນທຸກຂະແໜງການ ເພື່ອຫັນເປັນທັນສະໄໝ. ຕໍ່ກັບການຜັນຂະຫຍາຍມະຕິກອງປະຊຸມຂອງພັກດັ່ງກ່າວ ຈຶ່ງມີບັນດານະໂຍບາຍຂອງລັດກຳນົດເປັນທິດທາງໃນການສະໜັບສະໜູນຫັນເປັນທັນສະໄໝ.

**3. ສິ່ງທ້າທາຍ ຂອງວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢູ່ ສປປ ລາວ:**

ສປປ ລາວ ກຳລັງປະເຊີນກັບສິ່ງທ້າທາຍຫຼາຍດ້ານ ເປັນຕົ້ນແມ່ນ:

- ການພັດທະນາບຸກຄະລາກອນເຕັກໂນໂລຊີ, ການສື່ສານ ແລະ ຂໍ້ມູນຂ່າວສານຍັງບໍ່ທັນກັບສະພາບການຄວາມໄວຂອງການປ່ຽນແປງ ນະວັດຕະກຳ, ເຕັກໂນໂລຊີ ແລະ ການສື່ສານ ໃນພາກພື້ນ ແລະ ສາກົນ;
- ການຂະຫຍາຍພື້ນຖານໂຄງລ່າງ ແລະ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ປົກຫຸ້ມໄປຮອດເຂດຫ່າງໄກສອກຫຼີກ ແມ່ນຍັງຊັກຊ້າ, ເນື່ອງຈາກ ປະຊາຊົນມີການອາໄສຢູ່ ຢ່າງກະແຈກກະຈາຍ ເຮັດໃຫ້ມີຄວາມທ້າທາຍໃນການກຳນົດວິທີການທີ່ແທດເໝາະ ໃນການຂະຫຍາຍພື້ນຖານໂຄງລ່າງ ແລະ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດໄປສູ່ເຂດຫ່າງໄກສອກຫຼີກ, ເຂດພູສູງ ແລະ ອື່ນໆ;
- ເຄື່ອງມືທີ່ໃຊ້ໃນການຕິດຕາມກວດກາ, ຄຸນນະພາບການບໍລິການ ຍັງມີຈຳກັດ;
- ການກຳນົດອັດຕາຄ່າບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຍັງນຳໃຊ້ລາຄາດຽວໃນທົ່ວປະເທດ, ເຮັດໃຫ້ ກຸ່ມຄົນທຸກຍາກ, ເຂດຊົນນະບົດຫ່າງໄກສອກຫຼີກ ບໍ່ສາມາດເຂົ້າເຖິງ ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໄດ້ເທົ່າທີ່ຄວນ;
- ຄວາມຮູ້ພື້ນຖານໃນການນຳໃຊ້ບໍລິການໂທລະຄົມມະນາຄົມຢ່າງປອດໄພ ແລະ ມີຄວາມຮັບຜິດຊອບ ຍັງມີຈຳກັດ ເຮັດໃຫ້ຍັງບໍ່ສາມາດປ້ອງກັນໄພຄຸກຄາມທາງໄຊເບີຂັ້ນພື້ນຖານ ສິ່ງຜົນໃຫ້ຕົກເປັນເຫຍື່ອ ແລະຖືກຫຼອກລວງຈາກກຸ່ມຄົນບໍ່ດີ, ກຸ່ມແກ໊ງຄໍເຊັນເຕີຕ່າງໆ.

ບັນຫາເຫຼົ່ານີ້ ເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ການພັດທະນາ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດຂອງ ສປປ ລາວ ແລະ ເປັນສິ່ງກີດຂວາງການນຳໃຊ້ເຕັກໂນໂລຊີໃໝ່, ເຮັດໃຫ້ຄອບຄົວທີ່ມີລາຍຮັບຕ່ຳ ບໍ່ສາມາດເຂົ້າເຖິງ ການບໍລິການດິຈິຕອນ ຊຶ່ງກໍ່ໃຫ້ເກີດມີຄວາມແຕກໂຕນທາງດິຈິຕອນລະຫວ່າງຕົວເມືອງ ແລະ ຊົນນະບົດ.

ການແກ້ໄຂສິ່ງທ້າທາຍເຫຼົ່ານີ້ແມ່ນມີຄວາມສຳຄັນຫຼາຍ ເພື່ອບັນລຸເປົ້າໝາຍການພັດທະນາວຽກໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ກາຍເປັນໂຄງລ່າງພື້ນຖານທີ່ສຳຄັນໃນການຫັນເປັນດິຈິຕອນ ຂອງ ສປປ ລາວ, ການເຊື່ອມໂຍງເຂົ້າກັບເສດຖະກິດດິຈິຕອນຂອງອາຊຽນ, ຮັບປະກັນໃຫ້ໂທລະຄົມມະນາຄົມ ແລະ ອິນເຕີເນັດເປັນຕົວກະຕຸ້ນໃຫ້ແກ່ການເຕີບໂຕແບບຍືນຍົງ ແລະ ຮອບດ້ານ. ຄວາມພະຍາຍາມໃນການປັບປຸງໂຄງລ່າງພື້ນຖານ, ຂະຫຍາຍໂຄງການຝຶກອົບຮົມໃຫ້ແກ່ຄົນງານທີ່ມີສີມືດີ ແລະ ປະຕິບັດໂຄງການດັດສົມລາຄາແກ່ກຸ່ມເປົ້າໝາຍເພື່ອຫຼຸດຄວາມແຕກໂຕນທາງດິຈິຕອນ ແລະ ສາມາດ ເຂົ້າເຖິງການບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດໃນທົ່ວປະເທດໃຫ້ນັບມື້ຫຼາຍຂຶ້ນ. ນອກຈາກນັ້ນ, ການຊຸກຍູ້ການພົວພັນຄູ່ຮ່ວມມືພາກລັດ - ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ເພີ່ມທະວີການລົງທຶນໃນໂຄງການຕ່າງໆ ເພື່ອຊຸກຍູ້ການພັດທະນາເສດຖະກິດໃນຂົງເຂດທີ່ຕ້ອງການທຶນຈຳນວນຫຼາຍ[8].

[8] www.itu.int/en/itu-wsis/SiteAssets/hls/statements/7/H.E._Mr_Hiem_Phommachanh.pdf).

## ພາກທີ II

## ວິໄສທັດ ແລະ ຈຸດປະສົງ

### 1. ວິໄສທັດ

ຮອດປີ 2040 ການພັດທະນາໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງຮັບປະກັນຄຸນນະພາບການບໍລິການ ໃຫ້ໄດ້ຕາມມາດຕະຖານສາກົນ, ຮອງຮັບການປະສົມປະສານເຕັກໂນໂລຊີ ຫຼາຍປະເພດ (Technologies Convergence), ເປັນຈຸດສູນກາງເຊື່ອມໂຍງພາກພື້ນ ແລະ ສາກົນ, ຮອງຮັບການບໍລິການດິຈິຕອນ ສໍາລັບການບໍລິຫານລັດ, ການບໍລິການປະຊາຊົນ ແລະ ທຸລະກິດ, ໃຫ້ບຸກຄະລາກອນ ແລະ ປະຊາຊົນລາວທົ່ວໄປ ມີທັກສະດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານສູງ, ເປັນກໍາລັງແຮງກ້າວສູ່ສັງຄົມເສດຖະກິດພູມປັນຍາ, ມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ເພື່ອຍົກລະດັບຊີວິດການເປັນຢູ່ສູງຂຶ້ນ ແລະ ຫັນເອົາວຽກງານ ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ມີຄຸນນະພາບ, ສັນຍານປົກຫຸ້ມ ໃນຂອບເຂດທົ່ວປະເທດ ແລະ ມີຄວາມພ້ອມໃນການແຂ່ງຂັນກັບສາກົນ. ສົ່ງເສີມນະວັດຕະກໍາດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຖືກຍອມຮັບຈາກສາກົນ ຄຽງຄູ່ກັບການຊຸກຍູ້ການນໍາໃຊ້ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ເຂົ້າໃນການພັດທະນາຂະແໜງການທີ່ກ່ຽວຂ້ອງເພື່ອຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ຢ່າງໝັ້ນຄົງຍືນຍົງ.

### 2. ຈຸດປະສົງ

ເພື່ອພັດທະນາວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປັນຕົ້ນ ການພັດທະນານິຕິກໍາຂອງວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການພັດທະນາບຸກຄະລາກອນດ້ານເຕັກໂນໂລຊີດິຈິຕອນ, ການຄຸ້ມຄອງຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການຄຸ້ມຄອງ ແລະ ຂະຫຍາຍ ໂຄງລ່າງພື້ນຖານ ແລະ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການພັດທະນາພລັດຟອມ, ການຄຸ້ມຄອງທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ, ອຸດສະຫະກໍາໂທລະຄົມມະນາຄົມ ແລະ ເປີດກວ້າງການຮ່ວມມື ເຊື່ອມໂຍງກັບເພື່ອນມິດຍຸດທະສາດ ແລະ ສາກົນໃຫ້ມີແບບແຜນ, ກໍານົດເປົ້າໝາຍ, ແຜນງານ, ວຽກຈຸດສຸມ ແລະ ໂຄງການສະໜັບສະໜູນ ເພື່ອໃຫ້ບັນລຸວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດໄລຍະ 20 ປີ (2021-2040) ແລະ ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030)[9].

### 3. ເປົ້າໝາຍຂອງຍຸດທະສາດການພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ປີ 2026 ຫາ 2040[10]

ເປົ້າໝາຍລວມຂອງຍຸດທະສາດການພັດທະນາດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດແມ່ນເພື່ອໝູນໃຊ້ເຕັກໂນໂລຊີດິຈິຕອນ ເປັນເຄື່ອງມືຫັນປ່ຽນ ເພື່ອຊຸກຍູ້ ສປປ ລາວ ກ້າວໄປສູ່ການເປັນສູນກາງການຜະລິດ ແລະ ການບໍລິການທີ່ກ້າວໜ້າ, ຮັດແໜ້ນພື້ນຖານເສດຖະກິດ-ສັງຄົມ ທີ່ເຂັ້ມແຂງ ແລະ ສາມາດກຸ້ມຕົນເອງ. ຍຸດທະສາດນີ້ ສອດຄ່ອງກັບ ຄໍາແນະນໍາຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU), ເນັ້ນໜັກໃສ່ການນໍາໃຊ້ ICT ເປັນຕົວກະຕຸ້ນ ສໍາລັບການພັດທະນາເສດຖະກິດ-ສັງຄົມ ໂດຍການສົ່ງເສີມການລວມຕົວທາງດ້ານດິຈິຕອນ, ໂຄງສ້າງພື້ນຖານທີ່ມີຄຸນນະພາບສູງ ແລະ ການສ້າງຄວາມສາມາດ. ນອກນັ້ນ, ຍັງສະທ້ອນໃຫ້ເຫັນເຖິງບັນດາບູລິມະສິດທີ່ໄດ້ກໍານົດໄວ້ໃນແຜນແມ່ບົດດ້ານດິຈິຕອນຂອງອາຊຽນປີ 2025, ເຊິ່ງສຸມໃສ່ການສ້າງປະຊາຄົມອາຊຽນທີ່ເຊື່ອມ

---

[10] ວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດໄລຍະ 20 ປີ (2021-2040) ແລະ ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030)

ໂຍງທາງດ້ານດິຈິຕອນ ແລະ ເຊື່ອມໂຍງເຂົ້າກັນ, ເນັ້ນໜັກເຖິງການພັດທະນາແບບຍືນຍົງ, ເສີມຂະຫຍາຍແຫຼ່ງທຶນມະນຸດ ແລະ ການຫັນເປັນດິຈິຕອນຂອງບັນດາຂະແໜງການທີ່ສຳຄັນ. ໂດຍການເຊື່ອມໂຍງເຂົ້າກັບຂອບເຂດດັ່ງກ່າວ, ສປປ ລາວ ໄດ້ມີເປົ້າໝາຍເພື່ອເອົາຊະນະການພັດທະນາທີ່ດ້ອຍໂອກາດ, ສະໜັບສະໜູນການເຕີບໂຕແບບຍືນຍົງ, ແລະ ປະກອບສ່ວນເຂົ້າໃນການເຊື່ອມໂຍງດ້ານດິຈິຕອນໃນພາກພື້ນ ໂດຍການ ເສີມຂະຫຍາຍປັດໃຈ ແລະ ທ່າແຮງບົ່ມຊ້ອນຂອງປະເທດເຮົາ ໂດຍນຳໃຊ້ເຕັກໂນໂລຊີດິຈິຕອນ ທີ່ເໝາະສົມ ໃຫ້ກາຍເປັນໂອກາດ, ເປັນກຳລັງແຮງ ແລະ ເປັນພື້ນຖານການຜະລິດ ແລະ ການບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກໃຫ້ແກ່ການເຕີບໂຕ ເພື່ອສ້າງພື້ນຖານ ເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງ ເພິ່ງຕົນເອງ ເປັນກ້າວໆ ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ທີ່ມີຄຸນນະພາບສູງ ເພື່ອເປັນປັດໃຈທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມ, ສືບຕໍ່ກະກຽມຄວາມພ້ອມຮອບດ້ານ ເພື່ອນຳເອົາປະເທດຊາດ ອອກຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.

1) **ເປົ້າໝາຍປີ 2030**: ສປປ ລາວ ຈະສ້າງບາດກ້າວໃໝ່ດ້ວຍການນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນບັນດາຂະແໜງການຕົ້ນຕໍເພື່ອພັດທະນາເສດຖະກິດ-ສັງຄົມ ໃຫ້ກາຍເປັນປະເທດທີ່ມີລາຍຮັບປານກາງສູງຕາມເສດຖະກິດພູມປັນຍາ, ສີຂຽວ ແລະ ຍືນຍົງ, ໂດຍສ້າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ເຂັ້ມແຂງເພື່ອໃຫ້ສັນຍານອິນເຕີເນັດຄວາມໄວສູງກວມເອົາ 90 ສ່ວນຮ້ອຍ ຂອງທຸກຕາແສງ, ຮັບປະກັນການບໍລິການອອນລາຍຕະຫຼອດ 24 ຊົ່ວໂມງ, ພ້ອມທັງພັດທະນາແຮງງານດິຈິຕອນໃຫ້ໄດ້ 1 ສ່ວນຮ້ອຍ ຂອງແຮງງານທັງໝົດເພື່ອປະກອບສ່ວນໃຫ້ເສດຖະກິດດິຈິຕອນບັນລຸ 5 ສ່ວນຮ້ອຍ ຂອງ GDP.
2) **ເປົ້າໝາຍປີ 2040**: ສປປ ລາວ ຈະນຳໃຊ້ເຕັກໂນໂລຊີໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງໃຫ້ກວມເອົາ 100 ສ່ວນຮ້ອຍ ຂອງທຸກຕາແສງ, ຂອງເຂດຕົວເມືອງ, ເຂດເສດຖະກິດພິເສດ, ເຂດນິຄົມອຸດສະຫະກຳ, ແຫຼ່ງທ່ອງທ່ຽວທັນສະໄໝ ແລະ ຕົວເມືອງອັດສະລິຍະ ເພື່ອເປັນໂຄງລ່າງພື້ນຖານທີ່ໝັ້ນທ່ຽງໃນການຂັບເຄື່ອນທຸກຂະແໜງການໄປສູ່ການຂະຫຍາຍຕົວແບບຍືນຍົງ, ຮອງຮັບການຜະລິດ ແລະ ການບໍລິຫານແບບອັດສະລິຍະ, ພ້ອມທັງເພີ່ມແຮງງານທີ່ມີທັກສະດ້ານດິຈິຕອນໃຫ້ເປັນ 4 ສ່ວນຮ້ອຍ ຂອງແຮງງານທັງໝົດ ເພື່ອປະກອບສ່ວນໃຫ້ລາຍຮັບຈາກເສດຖະກິດດິຈິຕອນບັນລຸເຖິງ 10 ສ່ວນຮ້ອຍ ຂອງ GDP.

ເພື່ອສຳເລັດ ເປົ້າໝາຍທີ່ກ່າວມາຂ້າງເທິງ ຕ້ອງໄດ້ສຸມໃສ່ບັນດາວຽກບູລິມະສິດຄື:

1.1. ເຜີຍແຜ່, ປຸກຈິດສຳນຶກໃຫ້ແກ່ຄະນະພັກ, ຄະນະນຳ ຂອງອຳນາດການປົກຄອງທຸກຂັ້ນ ໃຫ້ເຫັນໄດ້ຄວາມສຳຄັນອັນຮີບດ່ວນ ແລະ ປະກອບສ່ວນຢ່າງຕັ້ງໜ້າ ໃນການຫັນເປັນດິຈິຕອນ ຂອງປະເທດ ຊຶ່ງເປັນວຽກງານຈຸດສຸມ, ເຊື່ອມໂຍງເປົ້າໝາຍ ຂອງການຫັນເປັນດິຈິຕອນ ກັບ ບັນດາເປົ້າໝາຍ ການພັດທະນາເສດຖະກິດສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ຮັບປະກັນຄວາມປອດໄພຂອງທຸກຂັ້ນ ແລະທຸກຂະແໜງການ;

1.2. ເພີ່ມທະວີ ສ້າງ, ປັບປຸງກົດໝາຍ, ນະໂຍບາຍ, ນິຕິກຳ ແລະ ບັນດາລະບຽບການລຸ່ມກົດໝາຍ ໃຫ້ສອດຄ່ອງເພື່ອສ້າງສະພາບແວດລ້ອມ ຂອງການພັດທະນາຢ່າງຍືນຍົງ ແລະ ສົ່ງເສີມການແຂ່ງຂັນຢ່າງສະເໝີພາບ ແລະເປັນທຳ ເຮັດໃຫ້ເສດຖະກິດດິຈິຕອນຂອງປະເທດ ມີການຂະຫຍາຍຕົວຢ່າງໝັ້ນຄົງ ໂດຍສະເພາະສ້າງນະໂຍບາຍສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ;

1.3. ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງ ທີ່ເປັນໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ ໃຫ້ຄອບຄຸມພື້ນທີ່ທົ່ວປະເທດ ສຸມໃສ່ການຂະຫຍາຍລະບົບສາຍສົ່ງ, ສະຖານນີສົ່ງ-ຮັບສັນຍານໂທລະສັບມືຖື, ພັດທະນາລະບົບການສື່ສານອິນເຕີເນັດຄວາມໄວສູງແບບບໍ່ມີສາຍ, ພັດທະນາເຄືອຂ່າຍພາກລັດ, ນຳໃຊ້ດາວທຽມລາວ ເຂົ້າໃນການສຶກສາທາງໄກ ແລະ ການບໍລິຫານພາກລັດໃນເຂດຫ່າງໄກສອກຫຼີກ ແລະ ອື່ນໆ;

1.4. ພັດທະນາ ລະບົບແລກປ່ຽນຂໍ້ມູນພາກລັດ, ຖານລະບົບຂໍ້ມູນລັດ, ຂໍ້ມູນເປີດພາກລັດ, ລະບົບບໍລິການລັດ ຜ່ານປະຕູດຽວ ແລະ ມາດຕະຖານລະບົບລັດດິຈິຕອນ ເພື່ອເຮັດໃຫ້ເກີດທຸລະກຳ ແລະ ແລກປ່ຽນຂໍ້ມູນ ອອນລາຍ, ສົ່ງເສີມການບໍລິຫານລັດ, ການຄ້າ, ການຊໍາລະ ແລະ ການທະນາຄານ ໃນຮູບແບບດິຈິຕອນ;

1.5. ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້ ຄວາມສາມາດ ທາງດ້ານດິຈິຕອນ ທີ່ສາມາດນໍາໃຊ້ເຕັກໂນໂລຊີຢ່າງມີຄວາມສາມາດ, ເຂົ້າໃຈເນື້ອໃນຂອງດິຈິຕອນ ແລະ ເຂົ້າເຖິງການນໍາໃຊ້ເຕັກໂນໂລຊີດິຈິຕອນ ຢ່າງມີຄຸນນະພາບ, ປະດິດສ້າງ, ຄົ້ນຄວ້າ ແລະ ສື່ສານດ້ວຍເຄື່ອງມືທີ່ເໝາະສົມ;

1.6. ສົ່ງເສີມ ພັດທະນາຜະລິດຕະພັນ ແລະ ການບໍລິການ ພາຍໃນປະເທດ ເພື່ອຫຼຸດຜ່ອນການນໍາເຂົ້າເຕັກໂນໂລຊີຈາກຕ່າງປະເທດ ແລະ ສາມາດສົ່ງອອກຜະລິດຕະພັນດິຈິຕອນ ຂອງ ສປປ ລາວ ອອກໄປຕ່າງປະເທດ, ພ້ອມທັງ ສ້າງໂອກາດ ແລະ ດຶງດູດການລົງທຶນຈາກຕ່າງປະເທດ ເພື່ອເຮັດໃຫ້ ສປປ ລາວ ເປັນແຫຼ່ງຜະລິດ ແລະ ບໍລິການ ຂອງວຽກງານດິຈິຕອນ ໃນພາກພື້ນ ແລະ ສາກົນ;

1.7. ສ້າງຄວາມໝັ້ນໃຈໃຫ້ສັງຄົມຕໍ່ຄວາມປອດໄພ ຂອງການນໍາໃຊ້ເຕັກໂນໂລຊີດິຈິຕອນ ແລະ ມີສ່ວນຮ່ວມໃນການພັດທະນາເສດຖະກິດດິຈິຕອນ ໂດຍການສ້າງຄວາມເຂັ້ມແຂງດ້ານການນໍາໃຊ້ດິຈິຕອນ ຂອງປະຊາຊົນ, ພັດທະນາລະບົບ, ເຄື່ອງມືດິຈິຕອນທີ່ມີຄວາມປອດໄພທາງໄຊເບີ, ຮັບປະກັນການປົກປ້ອງຂໍ້ມູນ, ການປົກປ້ອງຜູ້ຊົມໃຊ້ ແລະ ປ້ອງກັນການຕົວະຍົວະຫຼອກລວງຕ່າງໆ;

1.8. ຊຸກຍູ້ສົ່ງເສີມການນໍາໃຊ້ເຕັກໂນໂລຊີດິຈິຕອນ ໃນທົ່ວສັງຄົມ ຕິດພັນກັບການດໍາລົງຊີວິດ ຂອງປະຊາຊົນ ເພື່ອຫຼຸດຜ່ອນຄວາມທຸກຍາກ, ການຍົກລະດັບຄຸນນະພາບການສຶກສາ, ການຍົກລະດັບຄຸນນະພາບສາທາລະນະສຸກ , ການກະຈາຍວຽກເຮັດງານທໍາ ແລະ ອື່ນໆ;

1.9. ຊຸກຍູ້, ສົ່ງເສີມ ແລະ ເປີດກວ້າງການຮ່ວມມື ກັບຄູ່ຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາເສດຖະກິດດິຈິຕອນ ຢູ່ ສປປ ລາວ, ຫຼຸດຜ່ອນການນໍາໃຊ້ງົບປະມານ ຂອງລັດຖະບານໃນການລົງທຶນ, ເຮັດໃຫ້ມີສ່ວນຮ່ວມ ທັງພາກລັດ ແລະ ເອກະຊົນ, ດຶງດູດການລົງທຶນ ຈາກພາກພື້ນ ແລະ ສາກົນ ເພື່ອສ້າງເສດຖະກິດດິຈິຕອນໃຫ້ເປັນຮູບປະທໍາຂຶ້ນເລື້ອຍໆ.

# ພາກທີ III

# ຍຸດທະສາດກ່ຽວກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນໄລຍະປີ 2026-2040

## 1. ຍຸດທະສາດທີ 1: ການພັດທະນານິຕິກຳດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ

### 1.1 ເປົ້າໝາຍ

ຮັບປະກັນໃຫ້ມີນະໂຍບາຍ ແລະ ນິຕິກຳທີ່ເໝາະສົມເພື່ອສະໜັບສະໜູນ ແລະ ສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາໂທລະຄົມ ແລະ ອິນເຕີເນັດ ໃຫ້ສອດຄ່ອງກັບບັນດາແຜນການ, ແຜນງານ ຂອງ ຂະແໜງເຕັກໂນໂລຊີ ແລະ ການສື່ສານ ແຕ່ລະໄລຍະ ລວມທັງວຽກງານ ຊຸກຍູ້, ຕິດຕາມ, ກວດກາ ແລະ ເຜີຍແຜ່ເຊື່ອມຊຶມການຈັດຕັ້ງປະຕິບັດບັນດາລະບຽບການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີປະສິດທິຜົນ, ໂປ່ງໃສ ເພື່ອດຶງດູດການລົງທຶນເຂົ້າໃນຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ຈາກທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນຂະແໜງການເພີ່ມຂຶ້ນຢ່າງຕໍ່ເນື່ອງ.

### 1.2 ແຜນງານ

ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດາກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ສອດຄ່ອງກັບ ສະພາບການພັດທະນາ ເຕັກໂນໂລຊີ, ເສດຖະກິດ-ສັງຄົມ ຂອງ ສປປ ລາວ, ພາກພື້ນ ແລະ ສາກົນໃນແຕ່ລະໄລຍະ.

### 1.3 ວຽກຈຸດສຸມ

1.3.1. ສ້າງ ແລະ ປັບປຸງ ກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການອອກອະນຸຍາດດຳເນີນທຸລະກິດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການຂະຫຍາຍ ແລະ ການນຳໃຊ້ພື້ນຖານໂຄງລ່າງໂທລະຄົມມະນາຄົມ ແລະ ອິນເຕີເນັດ, ສົ່ງເສີມການແຂ່ງຂັນ ລະຫວ່າງຜູ້ໃຫ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ເປັນທຳ, ການປົກປ້ອງສິດ, ພັນທະ ແລະ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການບໍລິການ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານສາກົນ, ສົ່ງເສີມການລົງທຶນຈາກຕ່າງປະເທດ, ຊຸກຍູ້ການຮ່ວມທຸລະກິດ ແລະ ການຖ່າຍທອດເຕັກໂນໂລຊີ ພ້ອມທັງສ້າງເງື່ອນໄຂ ໃຫ້ວິສາຫະກິດພາຍໃນ ແລະ ຕ່າງປະເທດ ສາມາດເຊື່ອມໂຍງ ແລະ ຮ່ວມມືກັນໄດ້ຢ່າງມີປະສິດທິຜົນ ໃນການສ້າງນະວັດຕະກຳ ແລະ ການຖ່າຍທອດເຕັກໂນໂລຊີໃຫ້ກັບຄົນລາວ;

1.3.2. ສ້າງກົນໄກຕິດຕາມ, ກວດກາ, ເຜີຍແຜ່ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ບັນດາກົດໝາຍ ແລະ ລະບຽບການ ໃຫ້ທຸກພາກສ່ວນໃນສັງຄົມຢ່າງມີປະສິດທິພາບ.

### 1.4 ໂຄງການສະໜັບສະໜູນ

1.4.1. ໂຄງການປັບປຸງກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ;

1.4.2. ໂຄງການສ້າງ ແລະ ປັບປຸງນິຕິກຳ ວ່າດ້ວຍການຄຸ້ມຄອງ ເລກໝາຍໂທລະຄົມມະນາຄົມ ແລະ ເລກໝາຍອິນເຕີເນັດ;

1.4.3. ໂຄງການສ້າງດຳລັດວ່າດ້ວຍ ການປົກປ້ອງ ຜູ້ໃຫ້ ແລະ ຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;

1.4.4. ໂຄງການສ້າງດຳລັດ ວ່າດ້ວຍຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ;

1.4.5. ໂຄງການສ້າງ ແລະ ປັບປຸງບັນດານະໂຍບາຍ ແລະ ນິຕິກຳ ດຶງດູດການລົງທຶນຈາກຕ່າງປະເທດ, ຊຸກຍູ້ການຮ່ວມທຸລະກິດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມໂຍງ ແລະ ການຖ່າຍທອດເຕັກໂນໂລຊີ ລະຫວ່າງວິສາຫະກິດພາຍໃນ ແລະ ວິສາຫະກິດຕ່າງປະເທດ;

1.4.6. ໂຄງການສ້າງຄວາມເຂັ້ມແຂງ ໃນການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ຕິດພັນກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ແກ່ ພະນັກງານຄຸ້ມຄອງທຸກຂັ້ນ, ຜູ້ໃຫ້ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ.

1.4.7. ໂຄງການປຸກຈິດສຳນຶກດ້ານ ICT ໂດຍການຈັດຝຶກອົບຮົມ, ໂຄສະນາຜ່ານສື່ມວນຊົນ ແລະ ຮ່ວມມືກັບສະຖາບັນການສຶກສາ ແລະ ອົງການສາກົນ (ເຊັ່ນ: ITU, APT);

1.4.8. ໂຄງການສ້າງກົນໄກຕິດຕາມ, ກວດກາ, ເຜີຍແຜ່ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳ ແລະ ລະບຽບການ ໃຫ້ທຸກພາກສ່ວນໃນສັງຄົມຢ່າງມີປະສິດທິພາບ.

## 2. ຍຸດທະສາດທີ 2: ການພັດທະນາບຸກຄະລາກອນທາງດ້ານເຕັກໂນໂລຊີດີຈີຕອນ

### 2.1 ເປົ້າໝາຍ

ພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີທັກສະໃນການນຳໃຊ້ເຕັກໂນໂລຊີໂທລະຄົມມະນາຄົມ, ອິນເຕີເນັດ ແລະ ເຕັກໂນໂລຊີ ການສື່ສານ ຂໍ້ມູນ-ຂ່າວສານ, ມີຫົວຄິດປະດິດສ້າງໃນການພັດທະນາວຽກງານການຫັນເປັນດີຈີຕອນ ໃຫ້ສາມາດຕອບສະໜອງຄວາມຕ້ອງການຕະຫຼາດແຮງງານທີ່ເຕັກໂນໂລຊີມີການປ່ຽນແປງຢ່າງວ່ອງໄວ. ການພັດທະນາຊັບພະຍາກອນມະນຸດສຸມໃສ່ການສ້າງຜູ້ຊ່ຽວຊານໃນດ້ານຕ່າງໆໃຫ້ໄດ້ປະລິມານ, ມີຄຸນນະພາບສູງ ແລະ ມີຈຳນວນແຮງງານດ້ານດີຈີຕອນ ກວມເອົາ 4 ສ່ວນຮ້ອຍ ຂອງແຮງງານທັງໝົດ ເພື່ອຮອງຮັບທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

### 2.2 ແຜນງານ

2.2.1. ສຶກສາ ສ້າງຫຼັກສູດການຮຽນການສອນ ດ້ານເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ ເຂົ້າໃນລະບົບການສຶກສາແຫ່ງຊາດໃນທຸກລະດັບ ເພື່ອໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດແຮງງານ ພາຍໃນ ສປປ ລາວ ແລະ ເປັນທີ່ຍອມຮັບໃນລະດັບພາກພື້ນ ແລະ ສາກົນ;

2.2.2. ສົ່ງເສີມການຮຽນຮູ້ນຳໃຊ້ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານໃຫ້ແກ່ປະຊາຊົນໃນເຂດຊົນນະບົດ ຫ່າງໄກສອກຫຼີກ, ກຸ່ມຄົນທຸກຍາກ, ກຸ່ມຄົນພິການ, ແມ່ຍິງ ແລະ ເດັກນ້ອຍທີ່ດ້ອຍໂອກາດໃຫ້ເຂົ້າເຖິງການນຳໃຊ້ບໍລິການອອນລາຍໃນຂອບເຂດທົ່ວປະເທດ;

2.2.3. ສົ່ງເສີມການນຳໃຊ້ ບໍລິການອອນລາຍ ຢ່າງປອດໄພ ແລະ ມີຄວາມຮັບຜິດຊອບຕໍ່ການນຳໃຊ້;

2.2.4. ສ້າງ ແລະ ຍົກລະດັບ ໃຫ້ບຸກຄະລາກອນ ທັງພາກລັດ - ເອກະຊົນ ແຕ່ຂັ້ນສູນກາງ ລົງຮອດຂັ້ນທ້ອງຖິ່ນໃຫ້ເປັນຜູ້ຊ່ຽວຊານທາງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ມີທັກສະການນຳໃຊ້ເຕັກໂນໂລຊີການສື່ສານ ແລະ ໄອຊີທີ ທຽບເທົ່າກັບພາກພື້ນ ແລະ ສາກົນ;

2.2.5. ສົ່ງເສີມການຮ່ວມມື ພັດທະນາຊັບພະຍາກອນມະນຸດ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ໄອຊີທີ ທຽບເທົ່າກັບພາກພື້ນ ແລະ ສາກົນ.

### 2.3 ວຽກຈຸດສຸມ

2.3.1. ສຸມໃສ່ ສຶກສາສ້າງຫຼັກສູດ ການຮຽນການສອນ, ຝຶກອົບຮົມ ແລະ ສຳມະນາວິຊາການ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ມີຄວາມຮູ້ຄວາມສາມາດ ໃຫ້ທັນກັບສະພາບການພັດທະນາຂອງເຕັກໂນໂລຊີ;

2.3.2. ສ້າງຫຼັກສູດການ ຮຽນຮູ້ນຳໃຊ້ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານໃຫ້ ແກ່ປະຊາຊົນໃນເຂດຊົນນະບົດ ຫ່າງໄກສອກຫຼີກ, ກຸ່ມຄົນທຸກຍາກ, ກຸ່ມຄົນພິການ, ແມ່ຍິງ ແລະ ເດັກນ້ອຍທີ່ດ້ອຍໂອກາດ ໃຫ້ເຂົ້າເຖິງການນຳໃຊ້ບໍລິການອອນລາຍໃນຂອບເຂດທົ່ວປະເທດ;

2.3.3. ສຸ່ມໃສ່ສ້າງຄູ່ມື ແລະ ໂຄສະນາກ່ຽວກັບການນຳໃຊ້ ບໍລິການອອນລາຍ ຢ່າງປອດໄພ ແລະ ມີຄວາມຮັບຜິດຊອບຕໍ່ການນຳໃຊ້;

2.3.4. ສຸມໃສ່ ສ້າງຜູ້ຊ່ຽວຊານດ້ານເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ ເຊັ່ນ: ສ້າງຜູ້ຊ່ຽວຊານດ້ານການອອກແບບ ແລະ ບໍລິຫານຈັດການເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ, ສ້າງຜູ້ຊ່ຽວຊານດ້ານການພັດທະນາການຕັ້ງຄ່າ ແລະ ບໍລິຫານຈັດການເຄືອຂ່າຍໃນລະດັບພື້ນຖານ, ສ້າງຜູ້ຊ່ຽວຊານດ້ານການຕິດຕັ້ງ ແລະ ບຳລຸງຮັກສາລະບົບສາຍໄຍແກ້ວນຳແສງ ແລະ ອື່ນໆ;

2.3.5. ຮ່ວມກັບພາກເອກະຊົນ, ຂະແໜງການຕ່າງໆ ແລະ ສະຖາບັນການສຶກສາທັງ ພາຍໃນ ແລະ ຕ່າງປະເທດ ພັດທະນາຫຼັກສູດຝຶກອົບຮົມໄລຍະສັ້ນ-ຍາວ ແລະ ຫຼັກສູດການສຶກສາດ້ານໂທລະຄົມມະນາຄົມ ແລະ ໄອຊີທີ ເພື່ອສ້າງກຳລັງແຮງງານ ໃຫ້ມີທັກສະສີມືທີ່ແນ່ນອນ.

**2.4 ໂຄງການສະໜັບສະໜູນ**

2.4.1. ໂຄງການສ້າງ ແລະ ພັດທະນາ ຫຼັກສູດ ການຮຽນການສອນ, ຝຶກອົບຮົມ, ສຳມະນາວິຊາການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

2.4.2. ໂຄງການສ້າງ ສູນການຮຽນຮູ້ການນຳໃຊ້ ເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານໃນເຂດຊົນນະບົດ ຫ່າງໄກສອກຫຼີກ ແລະ ກຸ່ມຕາແສງ ແລະ ບ້ານເປົ້າໝາຍພັດທະນາ;

2.4.3. ໂຄງການສ້າງຄູ່ມື ແລະ ໂຄສະນາການຮຽນຮູ້ນຳໃຊ້ບໍລິການອອນລາຍຢ່າງປອດໄພ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມໃນຂອບເຂດທົ່ວປະເທດ;

2.4.4. ໂຄງການຍົກລະດັບຄວາມຮູ້ທາງດ້ານເຕັກໂນໂລຊີ ແລະ ການສື່ສານ ຂັ້ນພື້ນຖານ ໃຫ້ແກ່ພະນັກງານລັດ ຂອງ ຂະແໜງການກ່ຽວຂ້ອງໃນໄລຍະສັ້ນ, ກາງ ແລະ ຍາວ;

2.4.5. ໂຄງການສົ່ງເສີມການສຶກສາ ແລະ ພັດທະນາ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ກັບຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ;

2.4.6. ໂຄງການແລກປ່ຽນບົດຮຽນກັບສະຖາບັນການສຶກສາພາຍໃນ ແລະ ຕ່າງປະເທດ ເພື່ອສ້າງ ແລະ ພັດທະນາໃຫ້ບຸກຄະລາກອນໄດ້ຮັບການຝຶກອົບຮົມໃນຫຼັກສູດທີ່ມີມາດຕະຖານສາກົນ ເພື່ອເສີມສ້າງມາດຕະຖານການສຶກສາທີ່ຍືນຍົງ ພ້ອມທັງການຮັບຮອງ ແລະ ພັດທະນາຫຼັກສູດຈາກອົງການລະດັບສາກົນເຊັ່ນ: ສະຖາບັນຂອງສະຫະພັນໂທລະຄົມມະນາຄົມສາກົນ (ITU Academy), ອົງການໂທລະຄົມມະນາຄົມພາກພື້ນເອເຊຍ-ປາຊີຟິກ (Asia-Pacific Telecommunity), Cisco, ສະມາຄົມອຸດສາຫະກຳເຕັກໂນໂລຊີຄອມພິວເຕີ (CompTIA), ສະມາຄົມສາຍໃຍແກ້ວນຳແສງ (Fiber Optic Association) ແລະ ອື່ນໆ.

**3. ຍຸດທະສາດທີ 3: ການຄຸ້ມຄອງຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ.**

**3.1 ເປົ້າໝາຍ**

ພັດທະນາ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ ລະບຽບການຄຸ້ມຄອງຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດເຊັ່ນ: ເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ, ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ ເພື່ອຮັບປະກັນ ການຄຸ້ມຄອງໃຫ້ມີ ປະສິດທິພາບ, ປະສິດທິຜົນ, ການສະໜອງການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ມີຄຸນນະພາບສູງ, ລາຄາເໝາະສົມ, ເຊື່ອຖືໄດ້, ສາມາດສ້າງລາຍຮັບເພີ່ມເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ.

**3.2 ແຜນງານ**

3.2.1. ສ້າງແຜນງານຄຸ້ມຄອງ ແລະ ຈັດສັນເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຂອງທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ເພື່ອຮອງຮັບເຕັກໂນໂລຊີ ແລະ ການບໍລິການໃໝ່ໃນອານາຄົດ ພ້ອມທັງສ້າງລາຍຮັບເພີ່ມໃຫ້ແກ່ພາກລັດ;

3.2.2. ພັດທະນາລະບົບຄຸ້ມຄອງເລກໝາຍໂທສັບ, ລະບົບອອກອະນຸຍາດທີ່ທັນສະໄໝ ເພື່ອອໍານວຍຄວາມສະດວກ ໃນການຂໍອະນຸຍາດ, ການຕິດຕາມ ແລະ ກວດກາ ການນໍາໃຊ້ເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ;

3.2.3. ເສີມຂະຫຍາຍຄວາມປອດໄພທາງອິນເຕີເນັດ ແລະ ປັບປຸງພື້ນຖານໂຄງລ່າງເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ທັນສະໄໝ ໂດຍການນໍາໃຊ້ WPA3;

3.2.4. ສ້າງແຜນງານການນໍາໃຊ້ IPv6 ຕັ້ງເປົ້າໝາຍການປະຕິບັດໃຫ້ໄດ້ 100 ສ່ວນຮ້ອຍ ພາຍໃນປີ 2040;

3.2.5. ສົ່ງເສີມການນໍາໃຊ້ ແລະ ການເຊື່ອມຕໍ່ອິນເຕີເນັດແຫ່ງສັບປະສິ່ງ (IoT) ຕໍ່ເຂົ້າໃນກິດຈະວັດປະຈໍາວັນ ເພື່ອອໍານວຍຄວາມສະດວກໃນການດໍາລົງຊີວິດ, ການປະຕິບັດວຽກງານ ຕະຫຼອດຮອດການດໍາເນີນທຸລະກິດຂອງປະຊາຊົນໃນສັງຄົມ;

3.2.6. ສໍາລັບແຜນງານທີ່ຕິດພັນກັບ ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕໍາແໜ່ງວົງໂຄຈອນດາວທຽມ ແມ່ນປະຕິບັດຕາມຍຸດທະສາດທີ່ຕິດພັນກັບວຽກງານດັ່ງກ່າວ.

**3.3 ວຽກຈຸດສຸມ**

3.3.1. ຄຸ້ມຄອງ, ສ້າງ ແລະ ປັບປຸງແຜນຈັດສັນ ເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ສອດຄ່ອງກັບການພັດທະນາເຕັກໂນໂລຊີ ແລະ ການບໍລິການໃໝ່ ເພື່ອສ້າງລາຍຮັບເພີ່ມໃຫ້ແກ່ລັດຖະບານ;

3.3.2. ສຸມໃສ່ ສ້າງ ແລະ ພັດທະນາລະບົບເຕັກນິກທີ່ຈໍາເປັນເພື່ອນໍາໃຊ້ເຂົ້າໃນວຽກງານຄຸ້ມຄອງ, ຈັດສັນ, ຕິດຕາມ, ກວດກາ, ສະໜອງຂໍ້ມູນການບໍລິການ ແລະ ອອກອະນຸຍາດ ການນໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງມີປະສິດຕິພາບ;

3.3.3. ຈັດຕັ້ງປະຕິບັດແຜນການປ່ຽນຖ່າຍການນໍາໃຊ້ IPv4 ມາເປັນ IPv6 ໃຫ້ສໍາເລັດໃນປີ 2040;

3.3.4. ຍົກລະດັບຄວາມປອດໄພຂອງເຄືອຂ່າຍການນໍາໃຊ້ WPA3 ຮັບປະກັນການປະຕິບັດຕາມມາດຕະຖານພາກພື້ນ ແລະ ສາກົນ;

3.3.5. ຊຸກຍູ້ການນໍາໃຊ້ບໍລິການອອນລາຍ ທີ່ມີການຢັ້ງຢືນຕົວຕົນຜ່ານເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ສຸ່ມໃສ ດັດສົມການຈໍາໜ່າຍເລກໝາຍໂທລະສັບ ຜ່ານຈຸດບໍລິການຂອງບັນດາບໍລິສັດໃຫ້ບໍລິການໂທລະຄົມທີ່ໄດ້ຮັບອະນຸຍາດ;

3.3.6. ສໍາລັບວຽກຈຸດສຸມ ທີ່ຕິດພັນກັບ ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕໍາແໜ່ງວົງໂຄຈອນດາວທຽມ ແມ່ນປະຕິບັດຕາມ ຍຸດທະສາດທີ່ຕິດພັນກັບວຽກງານດັ່ງກ່າວ.

### 3.4 ໂຄງການສະໜັບສະໜູນ

3.4.1. ໂຄງການສ້າງ ແລະ ປັບປຸງແຜນຈັດສັນເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ;

3.4.2. ໂຄງການສ້າງລະບົບຕິດຕາມສະຖານະ ແລະ ການນຳໃຊ້ເລກໝາຍໂທລະສັບມືຖື;

3.4.3. ໂຄງການພັດທະນາລະບົບຄຸ້ມຄອງເລກໝາຍໂທລະສັບ ແລະ ອິນເຕີເນັດ ໃຫ້ສາມາດຕິດຕາມ ແລະ ກວດກາ ການນຳໃຊ້;

3.4.4. ໂຄງການສ້າງລະບົບຄຸ້ມຄອງການນຳໃຊ້ e-sim;

3.4.5. ໂຄງການສ້າງລະບົບຕິດຕາມ ແລະ ກວດກາ ການອອກອະນຸຍາດ ເລກໝາຍໂທລະຄົມມະນາຄົມ ແລະ ອິນເຕີເນັດ;

3.4.6. ໂຄງການສ້າງລະບົບໂອນຍ້າຍເຄືອຂ່າຍໂດຍນຳໃຊ້ເລກໝາຍເກົ່າ (Mobile Number Portability system);

3.4.7. ໂຄງການພັດທະນາ ແລະ ບໍລິການ ລະບົບສະໜອງຂໍ້ມູນຜ່ານເລກໝາຍໂທລະສັບມືຖື ແບບຄົບຊຸດ;

3.4.8. ໂຄງການປ່ຽນຖ່າຍການນຳໃຊ້ IPv4 ມາເປັນ IPv6;

3.4.9. ໂຄງການຍົກລະດັບພື້ນຖານໂຄງລ່າງ ແລະ ການແກ້ໄຂບັນຫາ, ຮັບປະກັນການຫັນປ່ຽນໄປສູ່ມາດຕະຖານ WPA3;

3.4.10. ໂຄງການລົງຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ວຽກງານຂຶ້ນທະບຽນ ແລະ ການຈຳໜ່າຍເລກໝາຍໂທລະສັບ ໃນແຕ່ລະໄລຍະ;

3.4.11. ສຳລັບໂຄງການ ທີ່ຕິດພັນກັບ ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ ແມ່ນປະຕິບັດຕາມ ຍຸດທະສາດທີ່ຕິດພັນກັບວຽກງານດັ່ງກ່າວ.

## 4. ຍຸດທະສາດທີ 4: ການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ

### 4.1 ເປົ້າໝາຍ

ເພື່ອຂະຫຍາຍເຄືອຂ່າຍໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ທົ່ວເຖິງ, ມີຄຸນນະພາບ, ໄດ້ມາດຕະຖານສາກົນ, ປະຢັດ, ຮັບປະກັນຄວາມປອດໄພໃນການນຳໃຊ້ ເພື່ອເປັນໂຄງລ່າງພື້ນຖານທີ່ຮັບປະກັນຢ່າງໝັ້ນທ່ຽງໃນການຫັນເປັນດິຈິຕອນ ຂອງ ສປປ ລາວ ພ້ອມທັງ ສ້າງ ແລະ ພັດທະນາໃຫ້ມີລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານເຄືອຂ່າຍໂທລະຄົມມະນາຄົມແລະ ອິນເຕີເນັດ.

### 4.2 ແຜນງານ

4.2.1. ກຳນົດແຜນຍຸດຕິການໃຫ້ບໍລິການລະບົບໂທລະສັບມືຖື 2G ກ່ອນປີ 2030 ແລະ 3G ກ່ອນປີ 2035;

4.2.2. ກຳນົດແຜນການຂະຫຍາຍ ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ເຄືອຂ່າຍລະບົບໂທລະສັບມືຖື ແລະ ອິນເຕີເນັດ ໃຫ້ຄວບຄຸມພື້ນທີ່ທຸກຕາແສງ ໃນຂອບເຂດທົ່ວປະເທດ, ພ້ອມທັງ ໃຫ້ຄວບຄຸມ ເຂດຕົວເມືອງ, ເຂດເສດຖະກິດພິເສດ, ເຂດນິຄົມອຸດສະຫະກຳ, ແຫຼ່ງທ່ອງທ່ຽວທັມະໄໝ ແລະ ຕົວເມືອງອັດສະລິຍະ ພ້ອມທັງສ້າງພື້ນຖານໂຄງລ່າງໃຫ້ຮອງຮັບເຕັກໂນໂລຊີໃໝ່ ໃຫ້ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ;

4.2.3. ສ້າງແຜນງານປັບປຸງຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

4.2.4. ສ້າງແຜນງານການເຊື່ອມຕໍ່ ແລະ ກຳນົດແຜນຂະຫຍາຍເສັ້ນທາງ ຜ່ານສູນກາງອິນເຕີເນັດແຫ່ງຊາດ (National Internet Exchange: NIX) ເພື່ອອຳນວຍຄວາມສະດວກໃຫ້ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສາມາດເຊື່ອມຕໍ່ໂດຍກົງ (Peering) ແລະ ຫຼຸດຜ່ອນຕົ້ນທຶນຄ່າເຊື່ອມຕໍ່;

4.2.5. ສຶກສາສ້າງ ລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ປະຊາຊົນໄດ້ຮັບຂໍ້ມູນແຈ້ງເຕືອນຢ່າງວ່ອງໄວ, ທົ່ວເຖິງ ແລະ ທັນສະພາບການ;

4.2.6. ສຶກສາສ້າງສະຖານີ ຮັບ-ສົ່ງ ສັນຍານ (BTS) ແບບເຄື່ອນທີ່ຂອງລັດຖະບານ ເພື່ອຮອງຮັບການໃຊ້ງານໃນກໍລະນີສຸກເສີນ ຫຼື ໄພພິບັດ;

4.2.7. ກໍານົດມາດຕະຖານ ແລະ ຂໍ້ບັງຄັບໃຫ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງເຂົ້າດໍາເນີນການແກ້ໄຂລະບົບໂທລະຄົມມະນາຄົມ ແລະ ອິນເຕີເນັດ ເມື່ອເກີດໄພພິບັດ.

**4.3 ວຽກຈຸດສຸມ**

4.3.1. ຈັດຕັ້ງປະຕິບັດແຜນຢຸດຕິການໃຫ້ບໍລິການລະບົບໂທລະສັບມືຖື 2G ບໍ່ເກີນ 2030 ແລະ 3G ບໍ່ເກີນ 2035;

4.3.2. ຂະຫຍາຍ ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ເຄືອຂ່າຍລະບົບໂທລະສັບມືຖືຄວາມໄວສູງ ໃຫ້ກວມ 90 ສ່ວນຮ້ອຍ ຂອງພື້ນທີ່ຕາແສງທົ່ວປະເທດພາຍໃນປີ 2030 ແລະ 100 ສ່ວນຮ້ອຍ ພາຍໃນປີ 2040. ພ້ອມທັງ ຂະຫຍາຍ ເຄືອຂ່າຍໃຫ້ຄອບຄຸມເຂດຕົວເມືອງ, ເຂດເສດຖະກິດພິເສດ, ເຂດນິຄົມອຸດສະຫະກໍາ, ແຫຼ່ງທ່ອງທ່ຽວທັນສະໄໝ ແລະ ຕົວເມືອງອັດສະລິຍະໃຫ້ໄດ້ 50 ສ່ວນຮ້ອຍ ໃນປີ 2030 ແລະ 100 ສ່ວນຮ້ອຍ ໃນປີ 2040.

4.3.3. ກໍານົດຕົວຊີ້ວັດ, ສ້າງແຜນປັບປຸງຄຸນນະພາບ, ສ້າງສູນຕິດຕາມ ແລະ ກວດກາຄຸນນະພາບໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ ເພື່ອດໍາເນີນການກວດກາຄຸນນະພາບໂທລະຄົມມະນາຄົມ ແລະ ອິນເຕີເນັດຢ່າງເປັນປົກກະຕິ;

4.3.4. ຄຸ້ມຄອງ, ຕິດຕາມ ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂອບເຂດທົ່ວປະເທດ ແລະ ການເຊື່ອມຕໍ່ລະຫວ່າງປະເທດ;

4.3.5. ສ້າງລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ປະຊາຊົນໄດ້ຮັບຂໍ້ມູນແຈ້ງເຕືອນ ແລະ ທົ່ວເຖິງ;

4.3.6. ກໍານົດມາດຕະການ ກະກຽມຄວາມພ້ອມໃນການ ຟື້ນຟູລະບົບໂທລະຄົມມະນາຄົມເມື່ອເກີດໄພພິບັດຮ່ວມມືກັບ ຂະແໜງການກ່ຽວຂ້ອງ;

4.3.7. ສ້າງສະຖານີ ຮັບ-ສົ່ງ ສັນຍານ (BTS) ແບບເຄື່ອນທີ່ຂອງລັດຖະບານ ເພື່ອຮອງຮັບການໃຊ້ງານໃນກໍລະນີສຸກເສີນ ຫຼື ໄພພິບັດ.

**4.4 ໂຄງການສະໜັບສະໜູນ**

4.4.1. ໂຄງການ ຈັດຕັ້ງປະຕິບັດການໃໝ່ຢຸດຕິການໃຫ້ບໍລິການ 2G ແລະ 3G ເພື່ອພັດທະນາເຕັກໂນໂລຊີໃໝ່;

4.4.2. ໂຄງການເກັບກໍາຂໍ້ມູນ ຈໍານວນບ້ານ ແລະ ຕາແສງ ທີ່ຍັງບໍ່ທັນມີສັນຍານ ໃນຂອບເຂດທົ່ວປະເທດ;

4.4.3. ໂຄງການ ຂະຫຍາຍລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງ ໃຫ້ໄປເຖິງເຂດຫ່າງໄກສອກຫຼີກ ໃນທົ່ວປະເທດ;

4.4.4. ໂຄງການຈັດຊື້ອຸປະກອນຮັບ-ສົ່ງສັນຍານວາຍຟາຍ ແລະ ສະໜອງບໍລິການອິນເຕີເນັດໂດຍບໍ່ເສຍຄ່າບໍລິການ ໃນຂົງເຂດການສຶກສາ, ສາທາລະນະສຸກ, ຄົມມະນາຄົມ ແລະ ສະຖານທີ່ທ່ອງທ່ຽວທີ່ສໍາຄັນ;

4.4.5. ໂຄງການ ສ້າງສູນຄຸ້ມຄອງ ກວດກາ ແລະ ຕິດຕາມ ຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ ຈໍານວນ 03 ສູນ (01 ສູນ ໃນແຕ່ລະພາກ);

4.4.6. ໂຄງການກຳນົດຕົວຊີ້ວັດຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ໄດ້ມາດຕະຖານສາກົນ ແລະ ເປັນໂຄ່ງລ່າງພື້ນຖານທີ່ຮັບປະກັນຢ່າງໝັ້ນທ່ຽງໃນການຫັນເປັນດິຈິຕອນ;

4.4.7. ໂຄງການລິງກວດກາ ຈຸດການເຊື່ອມຕໍ່ລະຫວ່າງປະເທດໃນຂອບເຂດທົ່ວປະເທດ;

4.4.8. ໂຄງການ ຕິດຕາມ ກວດກາ ການນຳເຂົ້າ-ສົ່ງອອກ ແລະ ຕິດຕັ້ງອຸປະກອນໂທລະຄົມມະນາຄົມ;

4.4.9. ໂຄງການ ຕິດຕາມ ກວດກາ ຈຸດເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂອບເຂດທົ່ວປະເທດ ແລະ ຄຸ້ມຄອງ ການບໍລິການເຊື່ອມຕໍ່ອິນເຕີເນັດລະຫວ່າງປະເທດ (IP transit);

4.4.10. ໂຄງການສ້າງລະບົບແຈ້ງເຕືອນ ແລະ ຕອບສະໜອງເມື່ອເກີດໄພພິບັດ ແລະ ເຫດສຸກເສີນຜ່ານເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ;

4.4.11. ໂຄງການຈັດຊື້ ລະບົບສະຖານນີຮັບ-ສົ່ງສັນຍານແບບເຄື່ອນທີ່ ເພື່ອນຳໃຊ້ເຂົ້າໃນວຽກງານສຳຄັນລະດັບຊາດ ແລະ ວຽກງານຕ້ານ, ສະກັດກັ້ນ ແລະ ບັນເທົາ ໄພພິບັດ ໄພທຳມະຊາດໃນແຕ່ລະໄລຍະ;

4.4.12. ໂຄງການ ສ້າງແຜນມາດຕະການກະກຽມຄວາມພ້ອມ ໃນການຟື້ນຟູລະບົບໂທລະຄົມມະນາຄົມເມື່ອເກີດໄພພິບັດ ຮ່ວມມືກັບຂະແໜງການກ່ຽວຂ້ອງ.

## 5. ຍຸດທະສາດທີ 5 ການພັດທະນາ, ສົ່ງເສີມ ແລະ ການຄຸ້ມຄອງ ພລັດຟອມ

### 5.1 ເປົ້າໝາຍ

ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ພລັດຟອມ ທີ່ໃຫ້ບໍລິການເທິງເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ມີຄວາມສະດວກ, ມີຄວາມປອດໄພ, ສາມາດຄຸ້ມຄອງຂໍ້ມູນດິຈິຕອນ, ມີການບໍລິການຢ່າງມີປະສິດທິພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້.

### 5.2 ແຜນງານ

5.2.1. ສົ່ງເສີມການສ້າງ ແລະ ນຳໃຊ້ ພລັດຟອມທີ່ມີປະໂຫຍດ, ຮອງຮັບພາສາລາວ ໂດຍສະເພາະ ພລັດຟອມທີ່ຄົນລາວສ້າງຂຶ້ນ;

5.2.2. ສົ່ງເສີມການພັດທະນາພລັດຟອມ ທີ່ນຳໃຊ້ສະດວກ, ມີຄວາມປອດໄພ, ເນື້ອໃນມີຄວາມຫຼາກຫຼາຍ ໂດຍສະເພາະ ໃນການສະໜັບສະໜູນການເຜີຍແຜ່ ແລະ ອະນຸລັກວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ;

5.2.3. ສົ່ງເສີມໃຫ້ມີການຮ່ວມມືເພື່ອສ້າງພລັດຟອມຮ່ວມກັນ ລະຫວ່າງພາກລັດ ແລະ ເອກະຊົນ;

5.2.4. ສົ່ງເສີມພລັດຟອມການຊຳລະສະສາງ ຜ່ານບັນຊີຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ.

### 5.3 ວຽກຈຸດສຸມ

5.3.1. ສ້າງຊ່ອງທາງໃນການເຂົ້າເຖິງ ບັນດາພລັດຟອມ ບໍລິການທີ່ສະດວກງ່າຍດາຍ ແລະ ກຳນົດມາດຕະຖານ ການພັດທະນາ ແລະ ນຳໃຊ້ ແອປພິເຄຊັນ ແລະ ພລັດຟອມ;

5.3.2. ຊຸກຍູ້ ແລະ ສົ່ງເສີມໃຫ້ມີການພັດທະນາບັນດາພລັດຟອມຕ່າງໆ ເຊັ່ນ: ພລັດຟອມຕະຫຼາດບໍລິການ (Services marketplace), ພລັດຟອມຕະຫຼາດຜະລິດຕະພັນ (Product marketplace), ພລັດຟອມການຊຳລະເງິນ (Payment platform), ພລັດຟອມການລົງທຶນ (Investment platform), ພລັດຟອມສື່ສັງຄົມອອນລາຍ (Social networks Platform), ພລັດຟອມການສື່ສານ (Communication platform): ພລັດຟອມການສື່ສານທາງສັງຄົມໂດຍກົງ, ພລັດຟອມເກມອອນລາຍ (Social gaming online platform), ພລັດຟອມວັດແທກຄວາມໄວອິນເຕີເນັດ (Speed Test

Platform), ພລັດຟອມແບບປິດ (Closed development platform), ພລັດຟອມຄວບຄຸມ (Controlled development platform), ພລັດຟອມແບບເປີດ (Open development platform);

5.3.3. ສ້າງພລັດຟອມ ທີ່ມີການຮ່ວມມືລະຫວ່າງ ພາກລັດ ແລະ ເອກະຊົນ;

5.3.4. ສົ່ງເສີມການສ້າງ, ພັດທະນາ ແລະ ການນຳໃຊ້ ພລັດຟອມຊຳລະສະສາງ ຜ່ານບັນຊີຂອງຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ.

**5.4 ໂຄງການສະໜັບສະໜູນ**

5.4.1. ໂຄງການຫຼຸດຜ່ອນເງື່ອນໄຂທີ່ບໍ່ຈຳເປັນໃນການໃຫ້ບໍລິການ ການເງິນຜ່ານບັນຊີ ຂອງຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;

5.4.2. ໂຄງການຊຸກຍູ້ ແລະ ສົ່ງເສີມການແນະນຳ ຫຼື ຕິດຕັ້ງ ພລັດຟອມບໍລິການ ຂອງ ພາກລັດເຂົ້າໃນ ອຸປະກອນດິຈິຕອນ ທີ່ຈະນຳເຂົ້າມາຈຳໜ່າຍໃນ ສປປ ລາວ;

5.4.3. ໂຄງການແຂ່ງຂັນການສ້າງພລັດຟອມບໍລິການ ໃຫ້ບໍລິການໃນ ສປປ ລາວ;

5.4.4. ໂຄງການສ້າງລະບົບ ເກັບກຳຂໍ້ມູນທົ່ວໄປຂອງ ການໃຊ້ບໍລິການຂອງບັນດາພລັດຟອມ ເພື່ອພັດທະນາ ຕໍ່ຍອດໃນການວິເຄາະຕະຫຼາດ ແລະ ພັດທະນາການບໍລິການ;

5.4.5. ໂຄງການຕິດຕາມກວດກາ ແລະ ປະເມີນຜົນຂອງບັນດາພລັດຟອມ ພາຍໃນ ສປປ ລາວ ເພື່ອ ຮັບປະກັນ ການພັດທະນາ ແລະ ການນຳໃຊ້ໃຫ້ມີຄວາມໂປ່ງໃສ, ປອດໄພ ແລະ ມີປະສິດທິພາບ;

5.4.6. ໂຄງການພັດທະນາແອັບພິເຄຊັນເທິງມືຖື ແລະ ພລັດຟອມການຄ້າອີເລັກໂຕນິກ;

5.4.7. ໂຄງການສົ່ງເສີມການນຳໃຊ້ພລັດຟອມຊຳລະສະສາງຜ່ານບັນຊີຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

5.4.8. ໂຄງການຊຸກຍູ້ ແລະ ສົ່ງເສີມ ໃນການເກັບພາສີ ແລະ ອາກອນ ຜ່ານບັນດາພລັດຟອມ.

**6. ຍຸດທະສາດທີ 6 ການຄຸ້ມຄອງ ແລະ ສົ່ງເສີມ ທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ.**

**6.1 ເປົ້າໝາຍ**

ຄຸ້ມຄອງ ແລະ ສົ່ງເສີມ ບັນດາຫົວໜ່ວຍທຸລະກິດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີການແຂ່ງຂັນ ບົນພື້ນຖານກົດໝາຍ ແລະ ລະບຽບການ ເພື່ອຫັນປ່ຽນຄຸນນະພາບການບໍລິການໃຫ້ດີຂຶ້ນທຽບເທົ່າສາກົນ, ນຳໃຊ້ ເຕັກໂນໂລຊີໃໝ່ທີ່ທັນສະໄໝ, ການບໍລິການມີຄວາມຍຸຕິທຳ, ໂປ່ງໃສ ໃນອັດຕາລາຄາທີ່ເໝາະສົມ ແລະ ສ້າງ ຜະລິດຕະພັນ ການບໍລິການດິຈິຕອນໃໝ່ ເປັນການປະກອບສ່ວນການຫັນເປັນດິຈິຕອນຂອງ ສປປ ລາວ.

6.2 ແຜນງານ

6.2.1 ສ້າງແຜນງານ ປົກປ້ອງຜູ້ໃຊ້ ແລະ ຜູ້ໃຫ້ ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອປ້ອງກັນ ການຜູກຂາດຕະຫຼາດ ແລະ ການບໍລິການທີ່ບໍ່ເປັນທຳ;

6.2.2 ສະໜັບສະໜູນໃຫ້ມີການແຂ່ງຂັນໃນຕະຫຼາດໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍໃຫ້ມີການ ນຳໃຊ້ພື້ນຖານໂຄງລ່າງຮ່ວມກັນ ແລະ ສາມາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຕາມລະບຽບ ການ ທີ່ກຳນົດໄວ້;

6.2.3 ສ້າງແຜນງານ ເພື່ອພັດທະນາ ແລະ ສົ່ງເສີມ ຫົວໜ່ວຍທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ ຮູບແບບໃໝ່ ແລະ ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອພັດທະນາຜະລິດຕະພັນການບໍລິການ ໃຫ້ຮອງຮັບກັບການຫັນເປັນດິຈິຕອນ ຂອງ ສປປ ລາວ;

6.2.4 ສ້າງແຜນງານດັດສົມອັດຕາຄ່າບໍລິການທີ່ເໝາະສົມ ເພື່ອໃຫ້ປະຊາຊົນໃນເຂດຫ່າງໄກສອກຫຼີກ ໃຫ້ສາມາດເຂົ້າເຖິງການບໍລິການດິຈິຕອນ, ສົ່ງເສີມຄວາມຖືກຕ້ອງການຕັດມູນຄ່າ, ການຄຸ້ມຄອງ ແລະ ນໍາໃຊ້ ມູນຄ່າເງິນຄົງເຫຼືອ ຂອງຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ໝົດອາຍຸການນໍາໃຊ້;

6.2.5 ສ້າງແຜນງານ ໃນການຕິດຕາມ, ກວດກາ ແລະ ປ້ອງກັນ ພຶດຕິກໍາທີ່ມີຄວາມສ່ຽງ ຈະເປັນການຫຼອກລວງຜ່ານທາງໂທລະຄົມມະນາຄົມ ແລະ ອິນເຕີເນັດ.

### 6.3 ວຽກຈຸດສຸມ

6.3.1. ສ້າງສື່ໂຄສະນາ ແລະ ເຜີຍແຜ່ວຽກ ປົກປ້ອງສິດ ແລະ ແກ້ໄຂຂໍ້ຂັດແຍ່ງ ຂອງຜູ້ໃຊ້ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6.3.2. ສໍາຫຼວດຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຍົກລະດັບເຄືອຂ່າຍການບໍລິການ ໃຫ້ແທດເໝາະກັບຄວາມຕ້ອງການຂອງຜູ້ນໍາໃຊ້ບໍລິການ;

6.3.3. ສ້າງເງື່ອນໄຂເພື່ອອໍານວຍຄວາມສະດວກໃນການນໍາໃຊ້ພື້ນຖານໂຄງລ່າງຮ່ວມກັນ ແລະ ສາມາດນໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ;

6.3.4. ສ້າງກົນໄກ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ສະພາບຕະຫຼາດໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອປ້ອງກັນການຜູກຂາດຕະຫຼາດ;

6.3.5. ສ້າງເງື່ອນໄຂ ແລະ ກົນໄກ ເພື່ອອໍານວຍຄວາມສະດວກ ໃນການສ້າງທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດຮູບແບບໃໝ່ ແລະ ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ;

6.3.6. ສ້າງກົນໄກ, ນະໂຍບາຍ, ກໍານົດ ພື້ນທີ່ ແລະ ຂົງເຂດ ເພື່ອດັດສົມອັດຕາຄ່າບໍລິການ ແລະ ສະໜອງບໍລິການໂດຍບໍ່ເສຍຄ່າ ທາງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ແທດເໝາະ ກັບຄວາມອາດສາມາດໃນການເຂົ້າເຖິງການບໍລິການດິຈິຕອນ ເຊັ່ນ: ເຂດຫ່າງໄກສອກຫຼີກ, ຂົງເຂດການສຶກສາ, ການບໍລິການສາທາລະນະສຸກ;

6.3.7. ສ້າງກົນໄກ ຄຸ້ມຄອງ ແລະ ນໍາໃຊ້ ມູນຄ່າເງິນຄົງເຫຼືອຂອງຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ໝົດອາຍຸການນໍາໃຊ້;

6.3.8. ສ້າງກົນໄກ ຕິດຕາມ ແລະ ກວດກາຄວາມຖືກຕ້ອງ ການຕັດຄ່າບໍລິການ ຂອງຫົວໜ່ວຍທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6.3.9. ພັດທະນາລະບົບຄຸ້ມຄອງ ໃນການຕິດຕາມ, ກວດກາ ແລະ ປ້ອງກັນ ພຶດຕິກໍາທີ່ມີຄວາມສ່ຽງຈະເປັນການຫຼອກລວງຜ່ານທາງໂທລະຄົມມະນາຄົມ ແລະ ອິນເຕີເນັດ.

### 6.4 ໂຄງການສະໜັບສະໜູນ

6.4.1. ໂຄງການ ສ້າງສື່ໂຄສະນາ ແລະ ເຜີຍແຜ່ວຽກ ປົກປ້ອງສິດ ແລະ ແກ້ໄຂຂໍ້ຂັດແຍ່ງ ຂອງຜູ້ໃຊ້ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6.4.2. ໂຄງການລົງ ສໍາຫຼວດຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຍົກລະດັບເຄືອຂ່າຍການບໍລິການ ໃຫ້ແທດເໝາະກັບຄວາມຕ້ອງການຂອງ ຜູ້ນໍາໃຊ້ບໍລິການ;

6.4.3. ໂຄງການປະເມີນຂີດຄວາມສາມາດຂອງໂຄງລ່າງພື້ນຖານໂທລະຄົມມະນາຄົມເພື່ອສ້າງເງື່ອນໄຂອໍານວຍ ຄວາມສະດວກໃຫ້ການນໍາໃຊ້ພື້ນຖານໂຄງລ່າງຮ່ວມກັນ;

6.4.4. ໂຄງການ ລົງເກັບກໍາຂໍ້ມູນ, ສໍາຫຼວດ, ວິເຄາະ ແລະ ກໍານົດຕົວຊີ້ວັດ ໃນການຄຸ້ມຄອງຕະຫຼາດ ແລະ ການແຂ່ງຂັນ ທາງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນ ສປປ ລາວ;

6.4.5. ໂຄງການກໍານົດເງື່ອນໄຂ ແລະ ກົນໄກ ເພື່ອອໍານວຍຄວາມສະດວກ ໃນການສ້າງທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດຮູບແບບໃໝ່ ແລະ ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ;

6.4.6. ໂຄງການ ສ້າງ ແລະ ພັດທະນາ ລະບົບການອອກອະນຸຍາດດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄວາມທັນສະໄໝ, ສະດວກ, ວ່ອງໄວ ແລະ ໂປ່ງໃສ;

6.4.7. ໂຄງການ ລົງເກັບກໍາຂໍ້ມູນ, ສໍາຫຼວດ, ວິເຄາະ ແລະ ກໍານົດ ພື້ນທີ່ ແລະ ຂົງເຂດ ເພື່ອດັດສົມອັດຕາຄ່າບໍລິການ ແລະ ສະໜອງບໍລິການໂດຍບໍ່ເສຍຄ່າສໍາລັບໃນຂົງເຂດການສຶກສາ, ສາທາລະນະສຸກ, ຄົມມະນາຄົມ ແລະ ສະຖານທີ່ທ່ອງທ່ຽວທີ່ສໍາຄັນ;

6.4.8. ໂຄງການ ສໍາຫຼວດ ກຸ່ມເປົ້າໝາຍ ໃນການສະໜອງບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ດ້ວຍອັດຕາຄ່າບໍລິການທີ່ເໝາະສົມ;

6.4.9. ໂຄງການ ສະໜອງອຸປະກອນໂທລະຄົມມະນາຄົມລາຄາຖືກ ໃຫ້ແກ່ປະຊາຊົນ ເຂດຫ່າງໄກສອກຫຼີກ, ປະຊາຊົນທຸກຍາກທີ່ບໍ່ມີເງື່ອນໄຂ ໃນການຈັດຊື້ບັນດາ ອຸປະກອນດັ່ງກ່າວ;

6.4.10. ໂຄງການສ້າງ ແລະ ພັດທະນາລະບົບຄຸ້ມຄອງ ຕິດຕາມ ແລະ ກວດກາ ມູນຄ່າເງິນຄົງເຫຼືອຂອງຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ໝົດອາຍຸການນໍາໃຊ້;

6.4.11. ໂຄງການ ພັດທະນາລະບົບຄຸ້ມຄອງ ຕິດຕາມ ແລະ ກວດກາ ຄວາມຖືກຕ້ອງຂອງການຕັດຄ່າບໍລິການຂອງຫົວໜ່ວຍທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6.4.12. ໂຄງການສ້າງ ແລະ ພັດທະນາລະບົບຄຸ້ມຄອງ ໃນການຕິດຕາມ, ກວດກາ ແລະ ປ້ອງກັນ ພຶດຕິກໍາທີ່ມີຄວາມສ່ຽງຈະເປັນການຫຼອກລວງຜ່ານທາງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຊັ່ນ: ການຫຼອກລວງ (Scamming), ການສົ່ງຂໍ້ຄວາມຫຼອກລວງ (SMS Fraud), ການໂຈນລະກໍາຂໍ້ມູນ (Phishing).

**7. ຍຸດທະສາດທີ 7: ການພັດທະນາ, ຊຸກຍູ້ສົ່ງເສີມອຸດສະຫະກໍາ ຂະແໜງການໂທລະຄົມມະນາຄົມ ແລະ ອິນເຕີເນັດ**

**7.1 ເປົ້າໝາຍ**

ສ້າງເງື່ອນໄຂອໍານວຍຄວາມສະດວກ, ກົນໄກ ແລະ ໂຄງລ່າງພື້ນຖານ ເພື່ອດຶງດູດການລົງທຶນ ສ້າງໂຮງງານຜະລິດ ແລະ/ຫຼື ປະກອບ ອຸປະກອນໂທລະຄົມມະນາຄົມ, ອິນເຕີເນັດ ແລະ ໄອຊີທີ ເຊັ່ນ: ສາຍແກ້ວໄຍແສງ, ອຸປະກອນຮັບ-ສົ່ງສັນຍານມີຖື, ອຸປະກອນຮັບ-ສົ່ງສັນຍານວາຍຟາຍ, ໂນດບຸກ, ໜ່ວຍມືຖື, ແທັບເລັດ ແລະ ອຸປະກອນໄອຊີທີອື່ນໆ ເພື່ອສ້າງຖານລາຍຮັບໃໝ່ ແລະ ໃຫ້ປະຊາຊົນລາວ ໄດ້ນໍາໃຊ້ອຸປະກອນດິຈິຕອນດ້ວຍລາຄາທີ່ຖືກ.

**7.2 ແຜນງານ**

7.2.1 ປັບປຸງ ເງື່ອນໄຂ ແລະ ກົນໄກ ໃນອະນຸຍາດການລົງທຶນສ້າງ ແລະ ພັດທະນາອຸດສາຫະກໍາຂະແໜງການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

7.2.2 ສ້າງແຜນການເຄື່ອນໄຫວ ເພື່ອດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ;

### 7.3 ວຽກຈຸດສຸມ

7.3.1 ຊຸກຍູ້ ໃຫ້ພາກເອກະຊົນມີສ່ວນຮ່ວມໃນຂະແໜງການຜະລິດອຸດສາຫະກຳໂທລະຄົມ ໂດຍການສ້າງສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນການດຳເນີນທຸລະກິດ ເປັນຕົ້ນແມ່ນສະເໜີໃຫ້ມີການຫຼຸດຜ່ອນດ້ານພັນທະຕ່າງໆ;

7.3.2 ກຳນົດເງື່ອນໄຂ ແລະ ກົນໄກ ເພື່ອຊຸກຍູ້ ແລະ ສົ່ງເສີມ ດຶງດູດການ ພັດທະນາອຸດສະຫະກຳໂທລະຄົມມະນາຄົມ ແລະ ອິນເຕີເນັດ ພາຍໃນ ແລະ ຕ່າງປະເທດ;

7.3.3 ຄົ້ນຄວ້າຊອກຫາແຫຼ່ງທຶນເພື່ອພັດທະນານະວັດຕະກຳ, ເຕັກໂນໂລຊີ ແລະ ສ້າງຕັ້ງສູນຄົ້ນຄວ້າວິໄຈການສ້າງອຸດສະຫະກຳໂທລະຄົມມະນາຄົມ.

### 7.4 ໂຄງການສະໜັບສະໜູນ

7.4.1 ໂຄງການສ້າງຕັ້ງບໍລິສັດສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ແຫ່ງຊາດ;

7.4.2 ໂຄງການດຶງດູດໃຫ້ມີໂຮງງານຜະລິດ ຫຼື ປະກອບອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢູ່ພາຍໃນປະເທດ ໃຫ້ໄດ້ 02 ໂຮງງານ ພາຍໃນປີ 2040;

7.4.3 ໂຄງການ ສ້າງ ແລະ ປັບປຸງ ບັນດາເງື່ອນໄຂ ແລະ ກົນໄກ ເພື່ອຊຸກຍູ້ ແລະ ສົ່ງເສີມ ດຶງດູດໃຫ້ມີການລົງທຶນໃສ່ ໃນການສ້າງໂຮງງານຜະລິດ ຫຼື ປະກອບ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ;

7.4.4 ໂຄງການສ້າງສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນການດຳເນີນທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອດຶງດູດການລົງທຶນ.

## 8. ຍຸດທະສາດທີ 8: ການຮ່ວມມື ແລະ ເຊື່ອມໂຍງກັບເພື່ອນມິດຍຸດທະສາດ ແລະ ສາກົນ.

### 8.1 ເປົ້າໝາຍ

ເປີດກວ້າງການຮ່ວມມືຮອບດ້ານກັບປະເທດເພື່ອນມິດຍຸດທະສາດ ແລະ ພົວພັນ ພາຍໃນ ແລະ ສາກົນ ດ້ານວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ມີຄວາມກ້າວໜ້າທາງດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ດ້ວຍການແລກປ່ຽນບົດຮຽນໃນການສ້າງນິຕິກຳ, ສ້າງມາດຕະຖານ, ການຝຶກອົບຮົມ, ສຳມະນາວິຊາການ, ແລກປ່ຽນຂໍ້ມູນຂ່າວສານ ແລະ ຍາດແຍ່ງທຶນຮອນ ເຂົ້າໃນການກໍ່ສ້າງບຸກຄະລາກອນ ເພື່ອພັດທະນາວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງ ສປປ ລາວ.

### 8.2 ແຜນງານ

8.2.1 ຮັດແໜ້ນການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ໂດຍການສ້າງຄວາມເຂັ້ມແຂງໃນການຮ່ວມມືກັບອົງການ ຈັດຕັ້ງສາກົນ, ອົງການຈັດຕັ້ງອາຊີ-ປາຊີຟິກ, ປະເທດອາຊຽນ, ປະເທດໃນອະນຸພາກພື້ນ ແລະ ວິສາຫະກິດຂ້າມຊາດ;

8.2.2 ປະສານງານກັບບັນດາຂະແໜງການພາກລັດ ແລະ ເອກະຊົນ ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈັດກິດຈະກຳຕ່າງໆ ເປັນຕົ້ນແມ່ນ: ການຈັດກອງປະຊຸມ, ສຳມະນາ ແລະ ຈັດຝຶກອົບຮົມ ຢູ່ພາຍໃນປະເທດ.

## 8.3 ວຽກຈຸດສຸມ

8.3.1. ພັດທະນາ ແລະ ຮັດແໜ້ນການຮ່ວມມື ສອງຝ່າຍ ແລະ ຫຼາຍຝ່າຍ ໃນລະດັບພາກພື້ນ ແລະ ສາກົນ ເຊັ່ນ: ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງ ອາຊີ-ປາຊີຟິກ, ບັນດາປະເທດອາຊຽນ, ບັນດາປະເທດໃນອະນຸພາກພື້ນ ແລະ ວິສາຫະກິດຂ້າມຊາດ;

8.3.2. ປະສານງານກັບບັນດາຂະແໜງການພາກລັດ ແລະ ເອກະຊົນ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບວຽກງານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ຈັດກິດຈະກຳຕ່າງໆ ເປັນຕົ້ນແມ່ນ: ການຈັດກອງປະຊຸມ, ສຳມະນາ ແລະ ຈັດຝຶກອົບຮົມ ຢູ່ພາຍໃນປະເທດ;

8.3.3. ສູ້ຊົນຍາດແຍ່ງທຶນເຂົ້າຮ່ວມຍົກລະດັບບຸກຄະລາກອນ, ສົ່ງເສີມວິຊາການ, ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ກັບບັນດາປະເທດ ເພື່ອນມິດຍຸດທະສາດ, ບັນດາຄູ່ຮ່ວມເຈລະຈາ ແລະ ສູ້ຊົນຍາດແຍ່ງ ໂຄງການ ຈາກກອງທຶນອາຊຽນໄອຊີທີ, ການຮ່ວມມືອານຸພາກພື້ນ ແລະ ສາກົນ.

## 8.4 ໂຄງການສະໜັບສະໜູນ

8.4.1. ໂຄງການ ແລກປ່ຽນບົດຮຽນກັບພາກລັດ ແລະ ເອກກະຊົນ ກ່ຽວກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ພາຍໃນປະເທດ;

8.4.2. ໂຄງການຮ່ວມມືວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂອບອາຊຽນ, ອົງການໂທລະຄົມມະນາຄົມ ອາຊີ-ປາຊີກຟິກ ແລະ ອົງການໂທລະຄົມມະນາຄົມສາກົນ;

8.4.3. ໂຄງການຮ່ວມມືວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂອບສອງຝ່າຍເປັນຕົ້ນແມ່ນປະເທດເພື່ອນມິດຍຸດທະສາດ ເຊັ່ນ: ສປປ ລາວ ກັບ ສສ. ຫວຽດນາມ, ສປປ ລາວ ກັບ ສປ.ຈີນ ແລະ ປະເທດອື່ນໆ.

## ພາກທີ IV
## ວິທີການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ

### 1. ວິທີການ ແລະ ກົນໄກຈັດຕັ້ງປະຕິບັດ

ເພື່ອຈັດຕັ້ງປະຕິບັດບັນດາຍຸດທະສາດ ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ທົ່ວສັງຄົມຕ້ອງເປັນເຈົ້າການປະຕິບັດ ວຽກງານພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂົງເຂດວຽກງານ ທີ່ຕົນຮັບຜິດຊອບ, ປະກອບສ່ວນ ປະຕິບັດພັນທະ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນຢ່າງຈະແຈ້ງ, ຕິດຕາມ ກວດກາປະເມີນຜົນ ຕາມບັນດາມາດຕະການລຸ່ມນີ້:

1) ຄະນະຊີ້ນຳປັນດິຈິຕອນລະດັບຊາດຊີ້ນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງປະສານສົມທົບ ກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດແຜນຍຸດ ທະສາດພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ ສະບັບນີ້, ໂດຍກຳນົດບັນດາໜ້າວຽກທີ່ ເປັນບຸລິມະສິດ, ຕິດຕາມ ກວດກາການຈັດຕັ້ງປະຕິບັດ, ກຳນົດງົບປະມານໃນແຕ່ລະໜ້າວຽກ, ໂຄງການທີ່ ສຳຄັນຕ່າງໆ ແຕ່ນີ້ຮອດປີ 2040;
2) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງການເງິນ, ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ກະຊວງຍຸຕິທຳ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 1: ການພັດທະນານິຕິກຳດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
3) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງສຶກສາທິການ ແລະ ກິລາ, ມະຫາວິທະຍາໄລ ແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 2: ການພັດທະນາບຸກຄະລາກອນ ທາງດ້ານເຕັກໂນໂລຊີດິຈິຕອນ;
4) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງປ້ອງກັນຊາດ, ກະຊວງປ້ອງກັນຄວາມສະຫງົບ , ກະຊວງການເງິນ ແລະ ຂະແໜງການຕ່າງໆ ຈັດຕັ້ງຜັນຂະຫຍາຍຍຸດທະສາດທີ 3: ການຄຸ້ມຄອງ ຊັບພະຍາກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ;
5) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງປ້ອງກັນຊາດ , ກະຊວງປ້ອງກັນຄວາມສະຫງົບ , ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງການເງິນ, ກະຊວງອຸດສະຫະກຳ ແລະ ການຄ້າ, ກະຊວງກະສິ ກຳ ແລະ ສິ່ງແວດລ້ອມ, ພາກເອກະຊົນ ແລະ ຂະແໜງການຕ່າງໆ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 4: ການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
6) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ບັນດາກະຊວງອົງການ ທີ່ຂຶ້ນກັບ ລັດຖະບານ, ພາກ ເອກະຊົນ ແລະ ຂະແໜງການຕ່າງໆຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 5: ການພັດທະນາ, ສົ່ງເສີມ ແລະ ການຄຸ້ມຄອງ ພລັດຟອມ;
7) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງ ການເງິນ, ກະຊວງ ອຸດສະຫະກຳ ແລະ ການ ຄ້າ, ພາກເອກະຊົນ ແລະ ຂະແໜງການຕ່າງໆ ຈັດຕັ້ງຜັນ ຍຸດທະສາດທີ 6: ການຄຸ້ມຄອງ ແລະ ສົ່ງເສີມທຸລະ ກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ;
8) ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບ ກະຊວງການເງິນ, ກະຊວງ ອຸດສະຫະກຳ ແລະ ການ ຄ້າ, ພາກເອກະຊົນ ແລະ ຂະໜງການຕ່າງໆ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 7: ການພັດທະນາ, ຊຸກຍູ້ ສົ່ງເສີມອຸດສະຫະກຳຂະແໜງການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
9) ກະຊວງເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບບັນດາ ກະຊວງການຕ່າງປະເທດ, ກະຊວງການເງິນ ບັນດາຄູ່ຮ່ວມ, ອົງການຈັດຕັ້ງສາກົນ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດທີ 8: ການຮ່ວມມື ແລະ ເຊື່ອມໂຍງ ກັບເພື່ອນມິດຍຸດທະສາດ ແລະ ສາກົນ;

10) อົງການຈັດຕັ້ງພາກລັດ, ເອກະຊົນ ແລະ ພາກສ່ວນອື່ນ ທີ່ມີໜ້າທີ່ກ່ຽວກັບຍຸດທະສາດນີ້ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ, ເອົາໃຈໃສ່ປະສານສົມທົບກັບທຸກພາກສ່ວນ ແຕ່ ສູນກາງເຖິງທ້ອງຖິ່ນ ແລະ ໃຫ້ການຮ່ວມມືແກ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
11) ສໍາລັບງົບປະມານທີ່ຈະນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້ ສ່ວນໜຶ່ງແມ່ນມາຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ກອງທຶນ ພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ງົບປະມານຂອງບັນດາພາກສ່ວນທີ່ກ່ຽວຂ້ອງໂດຍ ສົມທົບກັບການຍາດແຍ່ງຊ່ວຍເຫຼືອຈາກສາກົນ ຕາມຄວາມເໝາະສົມ.

## 2. ການຕິດຕາມ ແລະ ປະເມີນຜົນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ແຕ່ງຕັ້ງຄະນະຮັບຜິດຊອບ ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໄລຍະກາງ ແລະ ໄລຍະທ້າຍ ຂອງແຜນຍຸດທະສາດສະບັບນີ້ ໂດຍການກວດກາ ຄັ້ງທໍາອິດ ແມ່ນຈັດຕັ້ງ ປະຕິບັດທ້າຍປີ 2030 ເພື່ອທົບທວນຄືນຜົນການຈັດຕັ້ງປະຕິບັດ ແຕ່ປີ 2026 -2030, ກວດກາ ຄັ້ງທີ 2 ໃນທ້າຍປີ 2040 ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດແຜນຍຸດທະສາດທັງໝົດ ນັບແຕ່ປີ 2030-2040. ໃນການກວດກາຕີລາຄາແຕ່ລະຄັ້ງ ຕ້ອງສະຫຼຸບໃຫ້ ເຫັນຜົນໄດ້ຮັບ, ຂໍ້ຄົງຄ້າງ, ບັນດາສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ, ທິດທາງປັບປຸງແກ້ໄຂໃນຕໍ່ໜ້າພ້ອມທັງປັບປຸງບັນດາເປົ້າໝາຍ, ວຽກງານຈຸດສຸມ ແລະ ໂຄງການ ຄືນໃໝ່ໃຫ້ແທດເໝາະກັບສະພາບໃນແຕ່ລະໄລຍະ.